<u>**ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ**</u>

**Copyright © 2014 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 3, 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 3, 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 7, 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11, 12, 13 and Easter
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11, 12, 13 and Easter
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ຄວາມກ້າຫານໃນເວລາມີການປ່ຽນແປງ

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>:** ໂຢຊວຍ ບົດທີ 1
**<u>ພູມຫລັງຂອງພຣະຄັມພີ</u>:** ໂຢຊວຍ ບົດທີ 1
**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ການນຳພາຂອງພຣະເຈົ້າ ຕຽມຄວາມກ້າຫານໃຫ້ພວກເຮົາ ໃນຖ້າມກາງການປ່ຽນແປງຕ່າງໆ
**<u>ຄຳຖາມເພື່ອການຄົ້ນຄວ້າ</u>:** ພວກເຮົາຈະເຫັນຄວາມກ້າຫານໄດ້ຢ່າງໃດ ໃນເວລາມີການປ່ຽນແປງ
**<u>ຈຸດປະສົງຂອງບົດຮຽນນີ້</u>:** ເພື່ອເຮັດໃຫ້ພວກເຮົາເຫັນເຖິງການນຳພາຂອງພຣະເຈົ້າ ແລະເຫັນພຣະຄຳຂອງພຣະອົງໃນເວລາມີການປ່ຽນແປງ.

## <u>ແຜນການສິດສອນສຳລັບຄຣູ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ(ໃຊ້ເວລາ 5 ນາທີ</u>

1. ແບ່ງນັກຮຽນອອກເປັນກຸ່ມຕາມຈຳນວນນັກຮຽນ. ຄຣູຈະຢາຍເຈັ້ງໃຫ້ນັກຮຽນແຕ່ລະກຸ່ມໆລະໃບເພື່ອຈະໄດ້ຂຽນເຖິງການປ່ຽນແປງເຊັ່ນ: ການຢ່າຮ້າງ, ການຕົກງານ, ການຍ້າຍຕ່າງຣັດ, ການເຈັບໄຂ້ໄດ້ພະຍາດ, ແລະຕໍ່ໆໄປ…ຄຳຖາມຕໍ່ໄປກໍຄືວ່າ ໃຫ້ນັກຮຽນຈັດຕາມລຳດັບວ່າອັນໃດຮ້າຍແຮງແລະຫລຸດລົງມາເປັນລຳດັບ.

2. ບອກໃຫ້ແຕ່ລະໝວດອ່ານນໍ້າເບີ 1 .ໃຫ້ແຕ່ລະໝວດອະທິບາຍຂອງໃຜຂອງລາວວ່າມີຜົນສະທ້ອນຫຍັງແດ່? ຕໍ່ຕົນເອງ, ຕໍ່ພີ່ນ້ອງ, ຕໍ່ແນວຄິດ……

3. ໜູນໃຈແຕ່ລະໝວດໃຫ້ເອົາພຣະເຢຊູເປັນສູນກາງຂອງຊີວິດ ໃນເວລາມີການປ່ຽນແປງ. ໃນພຣະຄັມພີການປ່ຽນແປງຂອງໂຢຊວຍເປັນການປ່ຽນແປງທີ່ຍາກທີ່ສຸດ ແຕ່ລາວກໍອີງພຣະເຈົ້າຢູ່ທຸກເວລາ (ພຣະຄັມພີ)

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30)</u>

4. ນຳພານັກຮຽນໃຫ້ເບິ່ງໃນພຣະຄັມພີບົດທີ 1. ໃຫ້ນັກຮຽນອ່ານແຕ່ຂໍ້ 1-9 ແລ້ວໃຫ້ຊຽນລົງວ່າພຣະເຈົ້າສັ່ງຫຍັງແດ່ກັບໂຢຊວຍ?

5. ຖາມເປັນກຸ່ມໆ ດ້ວຍການໃຫ້ອະທິບາຍເຖິງຄຳສັນຍາແຕ່ລະຢ່າງ.

   ໂດຍສະເພາະສ່ວນຕົວແລ້ວໂຢຊວຍຈະສາມາດປະຕິບັດຕາມຄຳສັ່ງຂອງພຣະເຈົ້າໄດ້ບໍ່? ອີງຕາມປະສົບການແລ້ວ ພຣະເຈົ້າມີຄວາມສັດຊື່ຕໍ່ຄຳສັນຍາຂອງພຣະອົງ ຈຶ່ງເຮັດໃຫ້ໂຢຊວຍຮັບໜ້າທີ່ການເປັນຜູ້ນຳຂອງອິສຣາເອນ.

6. ນຳພານັກຮຽນໃຫ້ອ່ານໂຢຊວຍ (1:10-15) ຖາມນັກຮຽນ ວ່າ ໂຢຊວຍໃຊ້ຄຳສັນຍາຂອງພຣະເຈົ້າໜູນໃຈປະຊາຊົນຄືແນວໃດ? ພຣະເຈົ້າໄດ້ມອບດິນແດນຕອນນີ້ໃຫ້ແກ່ເຈົ້າແລ້ວ. ຂໍ້ທີ 11 ພຣະເຈົ້າຈະໃຫ້ພວກເຈົ້າທັງຫລາຍພັກຜ່ອນ.ຂໍ້ 13-15

7. ແນະນຳແຕ່ລະໝວດໃຫ້ອ່ານ ຂໍ້ 16-18 ແລ້ວພາກັນສົນທະນາ ຄົນອິສຣາເອນມີຄວາມຮັບຜິດຊອບຢ່າງໃດຕໍ່ຄຳເວົ້າຂອງໂຢຊວຍ? ໃຫ້ເບິ່ງໃນເຈັ້ງບົດຮຽນ

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ໃຫ້ນັກຮຽນຄົນນຶ່ງຫລືສອງຄົນອ່ານຄຳຖາມສົນທະນາ ແຕ່ຄຳຖາມ 2 ຫາຄຳຖາມ 5 ຢູ່ໃນເຈັ້ງບົດຮຽນ. ໜູນໃຈນັກຮຽນໃຫ້ທຸກຄົນໄດ້ປະກອບສ່ວນໃນປະສົບການນີ້

9. ປິດບົດຮຽນດ້ວຍການອະທິຖານ ໜູນໃຈແຕ່ລະໝວດໃຫ້ອະທິຖານເພື່ອ: ໃຫ້ມີຄວາມເຊື່ອເຂັ້ມແຂງຂຶ້ນເວລາມີບັນຫາ,: ຫລືວ່າມີບັນຫາໃນການປ່ຽນແປງຕ່າງໆ, ເຊື່ອຟັງຄຳສັ່ງຂອງພຣະເຈົ້າ, ເຂັ້ມແຂງຂຶ້ນໃນຄວາມເຊື່ອ, ສລາດໃນການສຶກສາພຣະຄັມພີ…….

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 2

# <u>ຄ້າຍຄືພຣະເອກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຊວຍ ບົດທີ 2

**<u>ພູມຫລັງຂອງພຣະຄັມພີ:</u>** ໂຢຊວຍ ບົດທີ 2

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ຄວາມກ້າເຊື່ອສາມາດເຫັນໄດ້ໃນຄົນທີ່ບໍ່ດີ, ແລະສາມາດເຫັນໄດ້ໃນສະຖານທີ່ໆບໍ່ອາດຄາດຄິດໄວ້ກ່ອນ

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຣື່ອງລາວຂອງນາງຣາຮັບ ສອນພວກເຮົາກ່ຽວກັບການກ້າເຊື່ອແມ່ນຄືແນວໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະໄດ້ເຫັນການຕີລາຄາຂອງພຣະເຈົ້າວ່າຢູ່ນຳຜູ້ໃດແລະຢູ່ໃສພຣະເຈົ້າຈຶ່ງຈະສຳແດງອອກ.

## <u>ແຜນການສິດສອນສຳລັບຄຣູ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ(ໃຊ້ເວລາ 5 ນາທີ</u>

10. ຫລັງຈາກຂຽນບັນຊີລົງໃສ່ກະດານແລ້ວ ໃຫ້ຖາມນັກຮຽນຜູ້ທີ່ສມັກໃຈອອກມາ ແລ້ວມາປ່ຽນ ອັນຂຶ້ນອັນລົງ. ວ່າຈະຍາກຫລືງ່າຍ.
    ປ່ຽນຍີ່ຫໍ້ຢາສີຟັນ
    ເອົາກາເຟອອກ
    ປ່ຽນທ່ານໝໍ ຫລື ປ່ຽນທ່ານໝໍແຂ້ວ
    ຍ້າຍລັດ
    ສາບານໃນແຕ່ລະທີມເພື່ອປ່ຽນທີມ
    ປ່ຽນສັງຄົມໃຫມ່
    ປ່ຽນພັກການເມືອງ
    ປ່ຽນສາສນາ ຫລືປ່ຽນຄວາມເຊື່ອ

11. ຖາມນັກຮຽນຜູ້ໃດທີ່ເຄີຍຖືກປ່ຽນສິ່ງເຫລົ່ານີ້ບໍ່? ຖາມຜູ້ໃດທີ່ຕອບວ່າເຄີຍປ່ຽນ ໃຫ້ອອກມາອະທິບາຍໃຫ້ໝູ່ຟັງວ່າເປັນຢ່າງໃດ? ສົນທະນາກ່ຽວກັບວ່າເປັນຫຍັງຈຶ່ງບໍ່ມັກ? ເປັນຫຍັງຈຶ່ງມັກ?

12. ຫັນເຂົ້າມາຫາພຣະຄັມພີທີ່ກ່ຽວກັບນາງຣາຮັບທີ່ພວກເຮົາຈະສຶກສານຳກັນໃນວັນນີ້. ຄົງຈະເປັນນຶ່ງໃນພັນທີ່ນາງແລະຄອບຄົວປ່ຽນແປງຢ່າງນີ້ ຄືປ່ຽນແປງຄວາມເຊື່ອ. ບົດຮຽນໃນມື້ນີ້ຈະບັລຍາຍໃຫ້ພວກເຮົາໄດ້ເຫັນ.

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30)

13. ອ່ານໂຢຊວຍ 2:1 ສົນທະນາຄຳຖາມທີ 1 ໃນເຈັ້ຽບົດຮຽນ. ເປັນຫຍັງສອດແນມທັງສອງຄົນຈຶ່ງໄປເຮືອນຂອງນາງໂສເພນີ (ຣາຮັບ)

14. ໃຫ້ຄົນນຶ່ງອ່ານໂຢຊວຍ 2:2-7  ບົ່ງບອກວ່ານາງຣາຮັບຫລອກໃຫ້ພວກທະຫານເຢຣິໂກອອກຈາກບ້ານຂອງນາງ. ມີການຕົວະອັນໃດບໍ່ ທີ່ຕົວະແລ້ວເຫັນວ່າຖືກຕ້ອງ? ເປັນຫຍັງພຣະຄັມພີຈຶ່ງບໍ່ຕຳໜິນາງຣາຮັບ ອ່ານ ໂຣມ 4:15 ດັ່ງໆ. ຕ້ອງອະທິບາຍໃຫ້ຈະແຈ້ງ  ຕອນນັ້ນນາງຣາຮັບຍັງບໍ່ທັນຢູ່ໃນກົດຣະບຽບຂອງພຣະເຈົ້າເທື່ອ ສົນທະນາການຕັດສິນຂອງພຣເຈົ້າຕອນເຂົ້າມາແລ້ວ ແລະຍັງບໍ່ທັນເຂົ້າມາ.

15. ອ່ານໂຢຊວຍ 2:8-13 ດັ່ງໆ ແລ້ວກໍວາງຄຳຖາມ ເປັນຫຍັງນາງຈຶ່ງຄາດເດົາວ່າເຢຣິໂກຈະຕ້ອງເສັຽຊັຍໃຫ້ແກ່ພວກອິສຣາເອນ? ສົນທະນາວ່າເປັນການຍາກບໍ່ທີ່ນາງຈະຕ້ອງປ່ຽນເບື້ອງ ແລະການຕັດສິນໃຈນີ້ເປັນການສ່ຽງເຖິງຊີວິດ ນາງເຄີຍຢູ່ເຢຣິໂກມາແລ້ວຈົນເຄິ່ງຊີວິດເປັນຫຍັງນາງຈຶ່ງປ່ຽນໄດ້? ສົນທະນາ. (ຈົ່ງເບິ່ງຊີວິດຂອງໂປໂລ) ແມ່ນຫຍັງນຳພາຄົນທີ່ບໍ່ເຊື່ອໃຫ້ມາເຊື່ອ ຫລືວ່າປ່ຽນແປງໄດ້.

16. ອ່ານໂຢຊວຍ 2:14-21 ໜູນໃຈໃຫ້ນັກຮຽນຖົກຖຽງກັນໃນການປ່ຽນແປງ: ທີມກິລາ, ພັກການເມືອງ, ຍ້າຍຣັດ.......

17. ອ່ານໂຢຊວຍ 2:22-24  ພວກສອດແນມມີທ່າທີຢ່າງໃດໃນການເຂົ້າມາລາຍງານ? ເປັນຫຍັງພວກເຂົາຈຶ່ງຢ້ານກົວຄົນອິສຣາເອນ? ສົນທະນາ.

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

18. ນາງຣາຮັບມີຄວາມເຊື່ອເພາະລາວເຄີຍໄດ້ຍິນກິດຕິສັບຂອງພຣະເຈົ້າມາແລ້ວ.
19. ພຣະເຈົ້າຈະຊ່ວຍພວກເຮົາໃນການປ່ຽນແປງຕ່າງໆ.  ອະທິຖານ

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ທຸກຄົນມີພາກສ່ວນ

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> ໂຢຊວຍ 3:5-17; 4:14-24

<u>**ພູມຫລັງຂອງພຣະຄັມພີ:**</u> ໂຢຊວຍ 3-4

<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ການຂ້າມກຳແພງຮ່ວມກັບພຣະເຈົ້າຕ້ອງອາສັຍບາດກ້າວແຫ່ງຄວາມເຊື່ອ.

<u>**ຄຳຖາມເພື່ອການຄົ້ນຄວ້າ:**</u> ມີກຳແພງອັນໃດທີ່ຂ້າພະເຈົ້າຕ້ອງຂ້າມໄປນັ້ນທີ່ເພິ່ງບາດກ້າວແຫ່ງຄວາມເຊື່ອໃນພຣະເຈົ້າ?

<u>**ຈຸດປະສົງຂອງບົດຮຽນ:**</u> ເພື່ອສະແດງເຖິງຄວາມເຊື່ອໃນພຣະເຈົ້າວ່າຕົນເອງຈະເອົາຊະນະບັນຫາໃນຊີວິດໄດ້ຢ່າງໃດ.

<u>**ເພື່ອຄວາມເຂົ້າໃຈ:**</u> ພຣະເຈົ້າໄດ້ແຍກນ້ຳທະເລແດງໃນສມັຍກ່ອນ ແລະພຣະເຈົ້າຍັງສັນຍາວ່າຈະຊ່ອຍພວກອິສຣາເອນແລະຈະຢູ່ນຳເພື່ອຊ່ອຍແຍກແມ່ນ້ຳຢໍດາເນໃນສມັຍນີ້.

## ບົດນຳ

ນີ້ບໍ່ແມ່ນຄັ້ງແລກທີ່ພວກອິສຣາເອນໄດ້ປະສົບກັບບັນຫາ ແຕ່ພວກເຂົາໄດ້ຮັບບັນຫາເກືອບເປັນຄັ້ງສຸດທ້າຍທີ່ຖືມທົ່ວ ເພາະການເດີນທາງໃນປ່າດິນຊາຍເກືອບຮອດ 40 ປີ. ຜູ້ນຳຄົນເກົ່າຄືໂມເຊໄດ້ເສັຽຊີວິດໄປແລ້ວ ແລະໂຢຊວຍເປັນຜູ້ນຳຄົນໃໝ່ແລະຍັງຂາດປະສົບການເປັນຜູ້ນຳພາໄປ.

ພວກອິສຣາເອນຄວນເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ ແຕ່ພວກເຂົາໄດ້ຕໍ່ສູ້ກັບຍັກໃຫຍ່ ແຕ່ບັດນີ້ຄວາມຢ້ານຂອງຄົນລຸ້ນເກົ່ານັ້ນໄດ້ຜ່ານພົ້ນໄປແລ້ວ ຄຳຖາມມີຢູ່ວ່າຄົນລຸ້ນໃໝ່ເວລານີ້ຈະກ້າເຂົ້າໄປຍຶດເອົາບໍ່? ເພາະພຣະເຈົ້າໄດ້ມອບແຜ່ນດິນຕອນນັ້ນໃຫ້ແລ້ວ. ພວກເຂົາຈະຕ້ອງອາສັຍຄວາມເຊື່ອໃນພຣະເຈົ້າເພື່ອເຂົ້າຍຶດເອົາຫລືບໍ່? ຕະກຸນຣູເບນ, ຕະກຸນກາດ, ແລະຕະກຸນມານັສເຊຍັງຈະຮັກສາຄຳສັນຍາທີ່ພວກເຂົາໄດ້ສັນຍາຕໍ່ພຣະເຈົ້າຫລືບໍ່ທີ່ຈະເຂົ້າໄປຍຶດເອົາແຜ່ນດິນນັ້ນ ຫລືພວກເຂົາຍັງຈະຄ້າງຢູ່ທາງຕາເວັນອອກຂອງແມ່ນນ້ຳຢໍດາເນຕາມເຄີຍ?

ຄວາມເຊື່ອໃນພຣະເຈົ້າຕ້ອງມີການເຊື່ອຟັງແລະມີການລົງມືປະຕິບັດ. ແນ່ນອນ ພຣະເຈົ້າຕ້ອງການໃຫ້ພວກອິສຣາເອນຂ້າມໄປ ແລະການລາຍງານຂອງພວກນັກສືບທີ່ສົ່ງອອກໄປກໍບອກວ່າເຮັດໄດ້ເພາະມັນເຖິງເວລາແລ້ວ ແຕ່ຄຳຖາມມີຢູ່ວ່າຈະເຮັດແນວໃດ?

ບົດ 3-4 ຈະໄດ້ຕອບຄຳຖາມຢ່າງນີ້ໂດຍຕ້ອງອາສັຍຄວາມເຊື່ອ. ພວກເຮົາບາງຄົນອາດມີບັນຫາໃນຄວາມເຊື່ອເໝືອນກັນເມື່ອພົບກັບເລື່ອງນີ້. ບົນຮຽນ 3-4 ນີ້ໄດ້ເຕືອນພວກເຮົາວ່າພຣະເຈົ້າໄດ້ສັດຊື່ໃນຄຳສັນຍາຂອງພຣະອົງຕໍ່ພວກເຮົາ ໃນຄຳສັນຍານັ້ນພຣະອົງຍອມປະທານທົນທາງອອກໃຫ້ໂດຍບໍ່ສາມາດມອງເຫັນກັບຕາໄດ້.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ເອີ້ນໃຫ້ມີຄົນສມັກມາຈັກສລາກເອົາກໍ້າເຈັ້ງທີ່ກະຕ່າຫລືໝວກ ແຕ່ລະກໍ້າເຈັ້ງນັ້ນມີອາຊີບແຕກຕ່າງກັນຂຽນໄວ້ເຊັ່ນ: ທ່ານໝໍ ທະນາຍຄວາມ ຊ່າງນໍ້າ ຊ່າງໄຟ ຄຣູສອນ ນັກບິນ ແລະອື່ນ..ບອກວ່າຄົນທີ່ມາຈັກສລາກນັ້ນແມ່ນຄົນທີ່ພຣະເຈົ້າສົ່ງມາເພື່ອຈະເອົາອາຊີບຕາມສິ່ງທີ່ຕົນເອງຈັກໄດ້. ເຊີນແຕ່ລະຄົນບອກໃຫ້ຄົນອື່ນຮູ້ວ່າຕົນເອງຈັກໄດ້ຫຍັງ. ຖາມວ່າມີໃຜບໍ່ມີປະສົບການທີ່ຈະເຮັດວຽກຢ່າງນັ້ນວັນນີ້ໄດ້? ສຳລັບຄົນທີ່ຕອບວ່າເລີ້ມບໍ່ໄດ້ເພາະບໍ່ມີຄວາມຮູ້ແລະປະສົບການ ຖາມອີກວ່າພວກເຂົາຈະໃຊ້ເວລາອີກຫລາຍປານໃດຈຶ່ງຈະເຮັດອາຊີບຕາມທີ່ຕົນເອງຈັກໄດ້?
2. ເຊີນໃຫ້ມີຄົນສມັກຍົກມືຂຶ້ນທີ່ເຫັນວ່າອາຊີບໃໝ່ນັ້ນມັນຍາກທີ່ສຸດ ແລະເຫັນວ່າຕົນເອງເຮັດບໍ່ໄດ້? ເຊີນໃຫ້ມີຄົນເວົ້າເຖິງຄວາມລຳບາກທີ່ຈະເຮັດອາຊີບໃໝ່ໃຫ້ທຸກຄົນໃນຫ້ອງຮຽນໄດ້ຍິນ.
3. ບອກວ່າເຊັ່ນດຽວກັນ ພວກອິສຣາເອນບໍ່ມີປະສົບການເຖິງໜ້າທີ່ໃໝ່ທີ່ພຣະເຈົ້າບອກພວກເຂົາໃຫ້ເຮັດ: ຄືເຂົ້າໄປຍຶດເອົາດິນແຫ່ງພຣະສັນຍາເພາະມີຫລາຍສິ່ງເປັນບັນຫາ ແລະຮູ້ວ່າຕົນເອງບໍ່ມີກຳລັງພໍຈະເອົາຊັຍຊະນະໄດ້.
4. ຖາມວ່າ ຖ້າຈະເດີນທາງໄປໄກ ຄົນເຮົາຈະຕຽມຕົວຢ່າງໃດ? ອ່ານໂຢຊວຍ 3:5 ທີ່ກ່າວເຖິງພວກອິສຣາເອນຕຽມຕົວຈະເຂົ້າໄປໃນແຜ່ນດິນການາອານ.
5. ແບ່ງຫ້ອງຮຽນອອກເປັນກຸ່ມນ້ອຍຕາມຈຳນວນຄົນ ບອກໃຫ້ແຕ່ລະກຸ່ມອ່ານໂຢຊວຍ 3:1-13 ບອກໃຫ້ແຕ່ລະກຸ່ມສລຸບເຖິງການຕຽມຕົວຕາມຄຳສັ່ງ.
6. ໃຫ້ແຕ່ລະກຸ່ມອ່ານ ຂໍ້ 14-17 ແລະລາຍງານໃຫ້ທຸກຄົນຮູ້ເຖິງສິ່ງທີ່ຕົນເອງເຂົ້າໃຈ.
7. ອ້ອນວອດປິດ ບອກໃຫ້ແຕ່ລະຄົນຟັງສຽງຂອງພຣະເຈົ້ານຳພາຊີວິດປະຈຳວັນຂອງຕົນ.

## <u>ຄຳຖາມ</u>

1. ພວກອິສຣາເອນມີຄວາມສົງສັຍອັນໃດ ເມື່ອພວກເຂົາຍ່າງຂ້າມນໍ້າຍໍດາເນໄປ?
2. ເປັນຫຍັງພວກອິສຣາເອນຕ້ອງເຂົ້າໃຈວ່າຄົນສມັຍປັດຈຸບັນຂ້າມນໍ້າຍໍດາເນແລະຄົນສມັຍພໍ່ແມ່ຂ້າມທະເລແດງກໍແມ່ນພຣະເຈົ້າອົງດຽວກັນ?
3. ທຸກວັນນີ້ພຣະເຈົ້າໄດ້ສະແດງພລັງແນວໃດໃນຊີວິດຂອງພວກເຮົາ?

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# <u>ເພິ່ງຕົນເອງ ແລະຄວາມບາບທີ່ບັງລັບໄວ້</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຊວຍ 7

**<u>ພູມຫລັງຂອງພຣະຄັມພີ:</u>** ໂຢຊວຍ 6-7

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການເພິ່ງຕົນເອງແລະເຮັດຄວາມບາບລັບໆນຳໄປເຖິງຄວາມພ່າຍແພ້ແລະຈິບຫາຍ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ການຕັດສິນໃຈເພິ່ງພຣະເຈົ້າເພື່ອຂ້າພະເຈົ້າຈະມີຊີວິດດີແລະເຮັດໃຫ້ຄົນອື່ນນັບຖືນັ້ນເປັນສິ່ງດີແລະຄວນເຮັດບໍ່?

**<u>ຈຸດປະສົງຂອງບົດຮຽນ:</u>** ບົດຮຽນນີ້ຈະຊ່ອຍໃຫ້ຂ້າພະເຈົ້າເພິ່ງພຣະເຈົ້າຫລາຍຂຶ້ນເພື່ອຈະເອົາຊະນະຕໍ່ຄວາມບາບ?

**<u>ເພື່ອຄວາມເຂົ້າໃຈ:</u>** ຫລັງຈາກຍຶດເອົາເມືອງເຢຣິໂກໄດ້ແລ້ວ ພວກທະຫານອິສຣາເອນຄ້າງຢູ່ເມືອງ ອາອີ ເພາະພວກເຂົາບໍ່ໄດ້ເຊື່ອຟັງຄຳສັ່ງຂອງພຣະເຈົ້າ. ຄວາມຜິດບາບຂອງຄົນດຽວໄດ້ເປັນຜົນສະທ້ອນອັນບໍ່ດີໄປເຖິງຄົນໝົດປະເທດ.

## ບົດນຳ

ໂຢຊວຍໄດ້ເປັນຜູ້ແທນໂມເຊແລະໄດ້ນຳພາພວກອິສຣາເອນໄປດ້ວຍພຣະປັນຍາຂອງພຣະເຈົ້າ. (ພຣະບັນຍັດ 2 ບົດ 31; 34:9). ໂຢຊວຍໄດ້ຢ້ຳຄວາມສຳຄັຍຂອງການສັດຊື່ຕໍ່ພຣະເຈົ້າຕາມພຣະບັດຍັດ (ໂຢຊວຍ 1:8). ໂຢຊວຍເປັນຜູ້ນຳທີ່ພາຄົນເຂົ້າໄປແຜ່ນດິນການາອານ ແລະພຣະເຈົ້າໄດ້ສັນຍາວ່າຈະຢູ່ກັບໂຢຊວຍຕລອດໄປ (1:5) ແລະຢູ່ກັບພວກອິສຣາເອນຄືກັນ (ພບຍ 2 ບົດ 31:6). ແຕ່ພຣະເຈົ້າຕ້ອງການໃຫ້ປະຊາຊົນເຊື່ອຟັງພຣະອົງທຸກຢ່າງ ຖ້າພວກເຂົາປະຖິ້ມພຣະອົງແລ້ວ ອະນາຄົດຂອງພວກເຂົາຈະໄດ້ພົບແຕ່ຄວາມຜິດຫວັງ (ພບຍ 2 ບົດ 6:1-14; 24-25).

ເວລາໂຢຊວຍໄດ້ພາປະຊາຊົນອິສຣາເອນຂ້າມແມ່ນ້ຳຢໍດາເນຢ່າງອັສຈັນໄປຍັງປະເທດການາອານ ໃນທັນໃດນັ້ນທຸກຄົນໄດ້ຖວາຍຕົນເອງຕໍ່ອົງພຣະຜູ້ເປັນເຈົ້າ (ບົດ 5), ພວກເຂົາໄດ້ເອົາຊັຍຊະນະຕໍ່ກຳແພງໃຫຍ່ລ້ອມເມືອງເຢຣິໂກ (ບົດ 6). ແມ່ນແທ້ການທີ່ພຣະເຈົ້າໄດ້ມອບເມືອງເຢຣິໂກໃຫ້ເປັນສິ່ງອັສຈັນຫລາຍ (6:2). ພຣະເຈົ້າໄດ້ບອກວ່າເມື່ອກຳແພງລົ້ມລົງແລ້ວ ໃຫ້ພວກເຂົາເຂົ້າໄປຍຶດເອົາເມືອງນັ້ນ ທຸກສິ່ງຢ່າງເປັນຂອງພຣະເຈົ້າ ໝາຍເຖິງເປັນຂອງສັກສິດ. ຫ້າມບໍ່ໃຫ້ເອົາອັນໃດໄປໃຊ້ສ່ວນຕົວ. ພວກນັກສືບອິສຣາ

ເອນໄດ້ສັນຍາກັບນາງ ຣາຮັບ (ບົດ 2) ວ່າຈະຊ່ອຍນາງພ້ອມທັງຄົວເຮືອນຂອງນາງເພາະຖືວ່າເປັນຄອບຄົວຂອງພວກອິສຣາເອນ. ພຣະເມດຕາຈາກພຣະເຈົ້າມີຕໍ່ຜູ້ທີ່ຮັກພຣະອົງໃນຍາມລຳບາກ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

8. ບອກໃຫ້ທຸກຄົນໃນຫ້ອງຮຽນອ່ານພຣະຄັມພີ ແລະໃຫ້ເອົາໃຈໃສ່ຕໍ່ຄຳເວົ້າ <u>ແຕ່ວ່າ...</u>
    - ຂ້າພະເຈົ້າຈະໄດ້ຂຶ້ນຊັ້ນ, ແຕ່ວ່າ...
    - ຂ້າພະເຈົ້າກຳລັງເລີ້ມດີຂື້ນດ້ານສຸຂພາບ, ແຕ່ວ່າ...
    - ທຸກສິ່ງເປັນໄປດ້ວຍດີ, ແຕ່ວ່າ...
    - ຂ້າພະເຈົ້າມີທຸກສິ່ງຢ່າງ, ແຕ່ວ່າ...
    - ຂ້າພະເຈົ້າໄດ້ຕົກລົງກັນເປັນຢ່າງດີ, ແຕ່ວ່າ...

   ເຊີນໃຫ້ແຕ່ລະຄົນແບ່ງເປັນປະສົບການວ່າຊີວິດຂອງຕົນເອງມີແຕ່ຄວາມລົ້ນເລີງຈົນໄດ້ພົບກັບການຜິດຫວັງໃນຊີວິດ.

9. ໃນບົດ ທີ 6 ເຫັນວ່າຄົນອິສຣາເອນຈະບໍ່ພົບກັບຄວາມປະຣາຊັຍ ຈົນກະທັ້ງພວກເຂົາໄດ້ເຮັດຜິດໂດຍການເພິ່ງຕົນເອງ.

10. ແບ່ງຫ້ອງອອກໄປກຸ່ມຕາມຈຳນວນຄົນ ແລະບອກໃຫ້ແຕ່ລະກຸ່ມອ່ານພຣະຄັມພີຕາມຂ້າງລຸ່ມນີ້ ແລະກຳເລືອກເອົາຜູ້ນຶ່ງເປັນຄົນລາຍງານໃຫ້ທຸກຄົນຮູ້ເຖີງກຸ່ມຕົນເອງໄດ້ຄົ້ນພົບ.
    ມີຫຍັງເກີດຂຶ້ນ ເມື່ອພວກເຮົາເພິ່ງຕົນເອງແທນທີ່ຈະເພິ່ງພຣະເຈົ້າ?
    - ອ່ານໂຢຊວຍ 7:1-13
    - ອ່ານບາດກ້າວຢ່າງໃດທີ່ໂຢຊວຍໄດ້ເຮັດເປັນສິ່ງບອກວ່າລາວໄດ້ເພິ່ງຕົນເອງຫລາຍກວ່າພຣະເຈົ້າ?
    - ການໄດ້ຊັຍຊະນະມາກ່ອນເຮັດໃຫ້ໂຢຊວຍມືນຕາຢ່າງເບິ່ງບໍ່ເຫັນແນວໃດ?
    - ໂຢຊວຍມີການປະພຶດແນວໃດຫລັງຈາກປະຣາຊັຍ?

    ມີຫຍັງເກີດຂຶ້ນໃນເມື່ອພວກເຮົາໄດ້ເຮັດຄວາມບາບຢ່າງລັບໆ?
    - ອ່ານໂຢຊວຍ 7:1-13
    - ອາຄານມີຄວາມສັມພັນຢ່າງໃດຕໍ່ກຸ່ມຄົນອິສຣາເອນ?
    - ແມ່ນຫຍັງເປັນຄວາມບາບຂອງອາຄານ?
    - ພຣະເຈົ້າເອົາເຣື່ອງອາຄານຫລາຍປານໃດ?

11. ເຊີນໃຫ້ຄົນນຶ່ງອ່ານໂຢຊວຍ 7: ຂໍ້ 1 ແລະຂໍ້ 14-26 ອອກສຽງດັງ. ບອກໃຫ້ອ່ານ ຂໍ້ 21 ແລະຕັ້ງຄໍາຖາມວ່າ ຄວາມຜິດຂອງອາຄານເປັນແນວໃດ?

12. ເຕືອນໃຫ້ທຸກຄົນໃນຫ້ອງໄດ້ຮູ້ວ່າພຣະເຈົ້າໄດ້ເອົາເຣື່ອງຄວາມຜິດຂອງຄົນດຽວໜັກຂນາດໃດ?

*ສບ. ບຸນຈັນ ວິງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# <u>ຄວາມໂງ່ຈ້າ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຊວຍ 9

**<u>ພູມຫລັງຂອງພຣະຄັມພີ:</u>** ໂຢຊວຍ 9

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການສແວງຫາພຣະປັນຍາຂອງພຣະເຈົ້າຊ່ວຍພວກເຮົາບໍ່ໃຫ້ຖືກຫລອກ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເປັນຫຍັງຈຶ່ງຖືວ່າເປັນການໂງ່ຈ້າໃນເມື່ອອາສັຍຄວາມຮູ້ສຶກຫລືຄວາມຄິດຂອງຕົນວ່າມັນຖືກຕ້ອງ?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອບໍ່ຢາກອາສັຍຄວາມຮູ້ສຶກຫລືຄວາມຄິດວ່າມັນຖືກຕ້ອງ ຂ້າພະເຈົ້າຕັດສິນໃຈສແວງຫາພຣະປັນຍາຈາກພຣະເຈົ້າ.

**<u>ເພື່ອຄວາມເຂົ້າໃຈ:</u>** ເພາະວ່າພວກອິສຣາເອນບໍ່ສແວງຫາພຣະປັນຍາຂອງພຣະເຈົ້າ ພວກເຂົາໄດ້ຖືກຫລອກ. ທຸກວັນນີ້ກໍຄືກັນພວກເຮົາອາດຖືກຫຼອກຖ້າບໍ່ເພິ່ງພຣະເຈົ້າ.

## ບົດນຳ

ພຣະເຈົ້າໄດ້ສັ່ງໃຫ້ໂຢຊວຍທຳລາຍທຸກສິ່ງຢ່າງທີ່ມີຊີວິດຢູ່ໃນເມືອງການາອານເວລາພວກອິສຣາເອັນໄດ້ຊັຍຊະນະ (ພຣະບັດຍັດ 2 ບົດ 20). ເປັນຫຍັງພຣະເຈົ້າຈຶ່ງເຮັດໂຫດຮ້າຍປານນັ້ນ? ຖ້າບໍ່ທຳລາຍຄົນພວກນັ້ນຈະພາໃຫ້ພວກອິສຣາເອັນໄປເຮັດສິ່ງທີ່ພຣະເຈົ້າກຽດຊັງເຊັ່ນ: ຖວາຍເດັກນ້ອຍ, ໃຊ້ເວດມົນຄາຖາ, ໃຊ້ໝໍຜີ, ສາບແຊ່ງ, ແລະປຶກສາກັບຄົນຕາຍ (ພຣະບັດຍັດ 2 ບົດ 18:9-13).

ຖ້າພວກອິສຣາເອັນເອົາທຳນຽມພວກການາອານ ໃນທີ່ສຸດຈິດໃຈຂອງພວກເຂົາກໍຈະຫັນໜີຈາກອົງພຣະຜູ້ເປັນເຈົ້າ. ພວກອິສຣາເອັນເປັນຄົນພິເສດທີ່ພຣະອົງໄດ້ເລືອກເອົາໄວ້ ເພື່ອຈະໄດ້ຖວາຍຕົວແລະໃຈຕໍ່ພຣະອົງ (ພຣະບັດຍັດ 2 ບົດ 7:6). ພຣະເຈົ້າຈະບໍ່ຍອມລົງໄປຫຼຽບກັບພຣະຂອງພວກການາອານເດັດຂາດແມ່ນແທ້ພວກການາອານສາມາດເບື່ອພວກອິສຣາເອັນໂດຍຫລອກໃຫ້ເຮັດຜິດບາບຕໍ່ພຣະເຈົ້າ.

ພວກການາອານມັກສແວງຫາຄວາມຮູ້ດ້ວຍການປຶກສາກັບຄົນຕາຍ ພວກເຂົາບໍ່ໄດ້ນັບຖືພຣະຂອງພວກເຂົາໃນທາງດີ ແຕ່ເພື່ອເຫັນແກ່ຕົວຢາກຮັ່ງມີເປັນດີຕ່າງຫາກ. ມີເຜົ່ານຶ່ງມາຈາກຕະກູນກິເບໂອນໄດ້ຫລອກໃຫ້ໂຢຊວຍແລະຜູ້ນຳອິສຣເອັນເຊັນສັນຍາສງົບເສິກ ເພາະພວກເຂົາມີຄວາມຢ້ານພຣະເຈົ້າແລະຄົນອິສຣາເອັນເພື່ອພວກເຂົາຈະບໍ່ໄດ້ຖືກທຳລາຍ. ການເຊັນສັນຍາຢ່າງນີ້ເຮັດໃຫ້ຄວາມສັມພັນຂອງພຣະເຈົ້າກັບພວກອິສຣາເອັນໄດ້ຂາດໄປ ເພາະໂຢຊວຍໄດ້ຕັດສິນໃຈເຮັດເອງຊຶ່ງບໍ່ໄດ້ປຶກສາກັບພຣະເຈົ້າກ່ອນ. ພຣະປັນ

ຍາຂອງພຣະເຈົ້ານັ້ນສຳຄັນຫລາຍເພື່ອພຣະພອນຈະຕົກລົງມາສູ່ຊີວິດ. ການຕັດສິນໃຈເຮັດຕາມໃຈນັ້ນເປັນຜົນໄປສູ່ຄວາມຫາຍຍານະ. ຄວາມຮູ້ສຶກແລະການເຂົ້າໃຈຢ່າງມະນຸດບໍ່ສາມາດເອົາມາແທນການນຳພາຂອງພຣະເຈົ້າໄດ້ເລີຍ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

13. ເຊີນເອົາຄົນມາຫລິ້ນກົນໃຫ້ສະມາຊິກໃນຫ້ອງເບິ່ງ ຈະເປັນສາກໃພ້, ໃຊ້ແຜ່ນົນ, ຫລືໃຊ້ເຊືອກ. ຖ້າບໍ່ມີກໍຊອກເອົາໜັງເຣື່ອງຫລິ້ນກົນ. ຫລັງຈາກນັ້ນແລ້ວຖາມສະມາຊິກໃນຫ້ອງວ່າການທີ່ພວກເຂົາໄດ້ເຫັນກັບຕາ ພວກຫລິ້ນກົນນັ້ນແມ່ນຄວາມສາມາດຂອງຄົນຫລິ້ນກົນເພື່ອລວງຕາເທົ່ານັ້ນຊຶ່ງບໍ່ແມ່ນຄວາມຈິງ. ບົດຮຽນວັນນີ້ແມ່ນເວົ້າເຖິງເຣື່ອງບໍ່ສັດຊື່ ຫລອກຕາ. ການຮູ້ຈັກກັບພຣະເຈົ້າຈະຊ່ອຍໃຫ້ພວກເຮົາບໍ່ຖືກຫລອກດ້ວຍກົນອຸບາຍໃດໆ.

14. ເອົາແຜນທີ່ໃຫຍ່ຂອງເມືອງການາອານໃນສມັຍຂອງໂຢຊວຍມາຕິດໃນຫ້ອງ ບອກໃຫ້ສະມາຊິກໃນຫ້ອງໝາຍຊື່ຂອງແຕ່ລະເຜົ່າທີ່ຂຽນໄວ້ໃນປຶ້ມໂຢຊວຍ ບົດ 9:1, ໃຫ້ໝາຍເມືອງເຢຣິໂກແລະເມືອງອາອີ.

15. ຫລິ້ນລະຄອນກ້ອມເຖິງເຣື່ອງພວກກິເບໂອນໄດ້ໃຊ້ກົນອຸບາຍຫລອກພວກອິສຣາເອັນ. ເຊີນເອົາສາມຄົນໃຫ້ມີສ່ວນໃນການຫລິ້ນລະຄອນ:
    - ໂຄສົກ-ອ່ານໂຢຊວຍ 9:1-6, 14-18, 22, 26-27 ອອກສຽງດັງ.
    - ຕົວແທນພວກກິເບໂອນ-ອ່ານຂໍ້ 6, 8, 9-13, 24-25 ອອກສຽງດັງ.
    - ໂຢຊວຍ-ອ່ານຂໍ້ 7, 8, 19-21, 22-23.

ຫລັງຈາກນັ້ນແລ້ວ ກ່າວສລູບເຖິງຂໍ້ສຳຄັນ. ບອກໃຫ້ຫ້ອງຮຽນອ່ານຂໍ້ 14 ອອກສຽງດັງ ຕັ້ງຄຳຕາມວ່າຂໍ້ນີ້ໄດ້ສລູບເຖິງຄວາມລຳບາກຂອງປະຊາກອນຂອງພຣະເຈົ້າແນວໃດ?

16. ແບ່ງຫ້ອງຮຽນອອກໄປເປັນກຸ່ມຕາມຈຳນວນຄົນທີ່ມີ. ບອກໃຫ້ແຕ່ລະກຸ່ມອ່ານສອງສາມຕອນຈາກພຣະຄັມພີປະຖົມມະການ. ບອກໃຫ້ສະມາຊິກອ່ານແລະຊອກຫາຄົນຫລອກລວງເຮັດແນວໃດໃນບົດອ່ານນີ້ ເລືອກເອົາຜູ້ນຳຈາກແຕ່ລະກຸ່ມເປັນຄົນລາຍງານໃຫ້ທຸກຄົນຮູ້ເຖິງສິ່ງທີ່ກຸ່ມຕົນເອງຄົ້ນພົບ.
    - ປຖກ 3:1-7 (ຊາຕານໄດ້ຫລອກອາດາມແລະເອວາ)
    - ປຖກ 12:10-20 (ອັບຣາຮາມຕົວະເຣື່ອງເມັຽຕົນເອງ)
    - ປຖກ 27:1-25 (ອີຊາກອວຍພອນແກ່ຢາໂຄບ)
    - ປຖກ 29:16-30 (ຢາໂຄບແຕ່ງງານກັບນາງ ເລອາແລະຣາເຊັນ)

- ປຖກ 39:11-20 (ໂຢເຊັບຖືກຫາເລື່ອງໃສ່ຈົນໄດ້ຕິດຄຸກ)
- ປຖກ 44:1-13 (ໂຢເຊັບຫລອກພວກອ້າຍ)

ເປີດເວລາໃຫ້ແຕ່ລະກຸ່ມລາຍງານໃຊ້ເວລາປະມານ 4-5 ນາທີ.

17. ກ່າວວ່ານີ້ເປັນຄັ້ງທີສອງທີ່ໂຢຊວຍໄດ້ເຮັດຕາມໃຈຢ່າງບໍ່ໄດ້ປຶກສາກັບພຣະເຈົ້າ. ຄັ້ງທີນຶ່ງແມ່ນເວລາໂຢຊວຍໄດ້ສົ່ງທະຫານໄປໂຈມຕີເມືອງອາອີ (ບົດ 7). ຕັ້ງຄຳຖາມວ່າ ໂຢຊວຍຈະເພິ່ງພຣະເຈົ້າຫລືລາວຈະເຮັດຕາມໃຈເພື່ອຖືກຫລອກ? ອະທິບາຍວ່າໃນບົດ 10 ກະສັດ 5 ອົງບໍ່ດີໃຈນຳຄົນກິເບໂອນເພາະພວກເຂົາໄດ້ສັນຍາກັບພວກອິສຣາເອັນ. ຄົນກິເບໂອນໄດ້ຂໍໃຫ້ພວກອິສຣາເອັນຊ່ວຍເມື່ອພວກກະສັດທັງ 5 ໄດ້ຍົກທັບມາຕີ. ອ່ານໂຢຊວຍ 10:8 ອອກສຽງດັງ. ຕອນນີ້ໂຢຊວຍຮຽນບົດຮຽນບໍ່ໄດ້ເຮັດອັນໃດຈົນເຖິງພຣະເຈົ້າຕັດສັ່ງ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# ຖວາຍຕົວຢ່າງແທ້ຈິງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຊວຍ 23; 24:14-15

**ພູມຫລັງຂອງພຣະຄັມພີ:** ໂຢຊວຍ 23-24

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຖືກເອີ້ນໃຫ້ຖວາຍຕົວຮັບໃຊ້ພຣະເຈົ້າຕລອດຊີວິດ.

**ຄຳຖາມເພື່ອການຄົ້ນຄວ້າ:** ຂ້າພະເຈົ້າໄດ້ບອກໃຫ້ຄົນອື່ນຮູ້ບໍ່ວ່າໃນຊີວິດນີ້ໄດ້ມອບຖວາຍເພື່ອຮັບໃຊ້?

**ຈຸດປະສົງຂອງບົດຮຽນ:** ເພື່ອປະເມີນຜົນແລະເນັ້ນເຖິງການຖວາຍຕົວຮັບໃຊ້ພຣະເຈົ້າຕລອດຊີວິດຂອງຂ້າພະເຈົ້າເປັນໄປຮອດໃສ.

**ເພື່ອຄວາມເຂົ້າໃຈ:** ໂຢຊວຍໄດ້ກ່າວສັ່ງລາເປັນການທ້າທາຍໃຫ້ປະຊາຊົນຖວາຍຕົວເອງສຸດຍອດແລະຮັບໃຊ້ພຣະອົງຢ່າງສັດຊື່.

## ບົດນຳ

ໂຢຊວຍໄດ້ຖວາຍຕົວຮັບໃຊ້ພຣະເຈົ້າຕລອດ ໃນເວລານຳປະຊາຊົນເຂົ້າໄປຍຶດເອົາແຜ່ນດິນການາອານຢ່າງສຳເຣັດດີ ເພິ່ນຮູ້ວ່າຊີວິດຮັບຜິດຊອບໃນການນຳພາຂອງຕົນຈະໄດ້ຈົບລົງ ແລະການຕາຍກໍຈະມາເຖິງອີກບໍ່ນານນີ້. ອາຍຸ 110 ປີ ໂຢຊວຍໄດ້ເອີ້ນໃຫ້ປະຊາຊົນອິສຣາເອັນມາທີ່ເມືອງເຊເຄັມຊຶ່ງເປັນເມືອງເອກຂອງປາແລສຕິນ.

ອັບຣາຮາມໄດ້ສ້າງແທ່ນບູຊາທີ່ເມືອງເຊເຄັມ (ປຖມ 12:7), ຢາໂຄບໄດ້ເອົາພຣະຕ່າງໆຂອງຄົນຊາດອື່ນໆໄປຝັງໄວ້ກ້ອງຕົ້ນໄມ້ທີ່ນັ້ນ (ປຖມ 35:1-4). ເມືອງເຊເຄັມນີ້ອາດເປັນສູງກາງທຳນຽມຂອງພວກຕ່າງຊາດໄດ້ມາເຕົ້າໂຮມກັນເພື່ອຖວາຍບູຊາແດ່ພຣະຂອງພວກເຂົາ. ແທ່ນບູຊາຂອງພຣະເຈົ້າອົງທ່ຽງແທ້ກໍຢູ່ເມືອງນີ້ເຊັ່ນກັນ. ດັ່ງນັ້ນ, ໂຢຊວຍຈຶ່ງທ້າທາຍພວກອິສຣາເອັນວ່າ "ວັນນີ້ໃຫ້ເລືອກເອົາວ່າທ່ານຈະຮັບໃຊ້ຜູ້ໃດ" (ໂຢຊວຍ 24:15) ແມ່ນເຣື່ອງທຽບພຣະອື່ນໆກັບພຣະເຈົ້າພຣະເຢໂຮວາ.

ບົດສັ່ງລາຂອງໂຢຊວຍຕໍ່ພວກອິສຣາເອັນມີສາມພາກສ່ວນ: ຄຳໜູນໃຈ ແລະຄຳສັ່ງ ໃຫ້ພວກເຂົາຕໍ່ສູ້ສືບຕໍ່ໄປເຣື່ອງເອົາຊັຍຊະນະຕໍ່ເມືອງການາອານ. ຄົນທີ່ເຄີຍຢູ່ເມືອງນີ້ໄດ້ຍ້ານແລະແຕກໄປທົ່ວທຸກບ່ອນໂຢຊວຍເປັນຫ່ວງຄົນທີ່ເຫລືອຢູ່ເມືອງການາອານ ເພາະພວກນີ້ອາດນຳພາພວກອິສຣາເອັນໃຫ້ເຮັດສິ່ງທີ່ພຣະເຈົ້າກຽດຊັງ ແລະໃນທີ່ສຸດພວກເຂົາຈະເອົາພຣະເຢໂຮວາຜູ້ບໍຣິສຸດອອກຈາກຊີວິດປະຈຳວັນ ແລະອອກຈາກເວລານະມັສການ.

ການໂຢຊວຍສັ່ງພວກອິສຣາເອັນມີທາງດີແລະທາງລົບ ຄຳຂວັນໃນຄຳສັ່ງສຸດທ້າຍນັ້ນແມ່ນຢາກໃຫ້ພວກອິສຣາເອັນສືບຕໍ່ຮັບໃຊ້ພຣະເຈົ້າ. ເພື່ອຢາກໃຫ້ພວກອິສຣາເອັນເຮັດຢ່າງນັ້ນໂຢຊວຍໄດ້ໃຊ້ຄຳເຕືອນເຂົາ, ຄຳຍົກຍ້ອງເຂົາ, ຄຳບອກໃຫ້ລະວັງຕົວສເມີ. 1. ໂຢຊວຍເຕືອນພວກອິສຣາເອັນເຖິງຄວາມດີຂອງພຣະເຈົ້າ ໂດຍສະເພາະເວລາໄດ້ຮັບຊັຍຊະນະທີ່ເມືອງການາອານ. 2. ໂຢຊວຍບອກໃຫ້ພວກອິສຣາເອັນສັດຊື່ຕໍ່ພຣະເຈົ້າເພາະພຣະອົງໄດ້ຊ່ວຍໃຫ້ພົ້ນຈາກພວກສັດຕຣູທັງຫລາຍ. 3. ໂຢຊວຍໄດ້ເຕືອນໃຫ້ລະວັງໃນອະນາຄົດຈົ່ງຮັກສາພຣະບັນຍັດຂອງພຣະເຈົ້າໄວ້.

ໃນຕອນສຸດທ້າຍໂຢຊວຍໄດ້ກ່າວເຖິງຄຳພະຍານສ່ວນຕົວ ແລະສັນຍາວ່າຈະສັດຊື່ແລະຮັບໃຊ້ພຣະເຈົ້າຜູ້ບໍ່ເຄີຍປະຖິ້ມເພິ່ນ. ເຊັ່ນດຽວກັນ ໜ້າທີ່ຂອງພວກເຮົາທຸກວັນນີ້ກໍຄືກັນໃຫ້ເປັນຄົນສັດຊື່ແລະຮັບໃຊ້ພຣະອົງຕລອດຊີວິດ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

18. ເອົາເຈັ້ຽໂປສເຕີຕິດໃສ່ຝາສີ່ດ້ານໃນຫ້ອງຮຽນ ແຕ່ລະດ້ານໃຫ້ຂຽນຂໍ້ພຣະຄັມພີດັ່ງຕໍ່ລົງໄປນີ້:
    - ທ່ອງຈຳ (ໂຢຊວຍ 23:1-5)
    - ຕິດພັນ (ໂຢຊວຍ 23:6-11)
    - ລື້ມຄືນ (ໂຢຊວຍ 23:12-16)
    - ຕໍ່ຄືນ (ໂຢຊວຍ 23:14-15)

ເອົາເຈັ້ຽໂປສເຕີອີກສີ່ອັນມາບົກເຈັ້ຽໂປສເຕີຂ້າງເທິງ ໃຫ້ທ່ານຂຽນປໂຍກຢ່າງນີ້:
- ຂ້າພະເຈົ້າມັກກ່າວເຖິງອະດີດ.
- ຂ້າພະເຈົ້າມັກຟັງຄົນລົມກັນກ່ຽວກັບອະດີດ.
- ຂ້າພະເຈົ້າມັກຈື່ຈຳອະດີດໄດ້ຢ່າງລັບໆ.
- ຂ້າພະເຈົ້າບໍ່ມັກຄຶດເຖິງອະດີດ; ຂ້າພະເຈົ້າມັກວາງແຜນສຳລັບອະນາຄົດ.

19. ເມື່ອສະມາຊິກເຂົ້າມາໃນຫ້ອງຮຽນ ບອກໃຫ້ແຕ່ລະຄົນໄປຢືນນຳເຈັ້ຽທີ່ຕົວເອງຄຶດວ່າແມ່ນລັກສະນະຂອງຕົນເອງ. ບອກໃຫ້ທຸກຄົນສົນທະນາກັນເຖິງຊີວິດທີ່ຜ່ານມາ. ເມື່ອສົນທະນາຈົບລົງແລ້ວກ່າວວ່າມະນຸດເຮົາມັກກ່າວເຖິງອະດີດຕາມໃຈຕົວເອງ-ບາງມັກຄົນເວົ້າ, ບາງມັກຄົນຟັງ, ແລະບາງຄົນມັກຄຶດ, ແລະບາງຄົນບໍ່ເຮັດອັນໃດ.
20. ເມື່ອທຸກຄົນໄດ້ນັ່ງລົງແລ້ວກ່າວວ່າ ໂ ຢຊວຍເປັນອາຈານໃຫຍ່ເຖິງການເບິ່ງຄືນຫລັງ ແລະເບິ່ງໄປໃນອະນາຄົດ. ເພິ່ນໄດ້ເຮັດໃຫ້ຈິດໃຈຂອງປະຊາກອນຂອງພຣະເຈົ້າໃຫ້ຫວນຄຶດເຖິງອະດີດ ແລະກໍວາງແຜນການຕໍ່ອະນາຄົດ. ບອກໃຫ້ຄົນນຶ່ງມາເອົາໂປສຕືນປົກທາງໜ້າອອກເພື່ອພວກເຂົາຈະໄດ້ເຫັນສິ່ງທີ່ຂຽນໄວ້ໃນໂປສເຕີກ່ອນນັ້ນ. ບອກວ່າຄຳເວົ້າເຫລົ່ານີ້ພວກເຂົາຈະໄດ້ສຶກສານຳກັນໃນວັນນີ້.

21. ບອກໃຫ້ທຸກຄົນເອົາໃຈໃສ່ຄຳເວົ້າ ທ່ອງຈຳ. ເຊີນໃຫ້ຄົນນຶ່ງອ່ານໂຢຊວຍ 23:1-5 ບອກໃຫ້ທຸກຄົນຟັງຄຳເວົ້າທີ່ກ່າວເຖິງອະດີດ. ຖາມວ່າ ອະດີດໄດ້ສິດສອນເຮົາຫຍັງແດ່ໃນການຖວາຍຕົວຕໍ່ພຣະເຈົ້າ? ບອກໃຫ້ຄົນແບ່ງປັນສູ່ກັນຟັງ.
22. ຈີ້ໃສ່ໂປສເຕີອັນທີສອງທີ່ກ່າວວ່າ ຕິດພັນ ເປັນສິ່ງສຳຄັນໃນການຖວາຍຕົວຕໍ່ພຣະເຈົ້າ. ເອົາຂໍ້ພຣະຄັມພີໂຢຊວຍ 23:6-11 ແຈກໃຫ້ແຕ່ລະຄົນ ບອກໃຫ້ຄົນນຶ່ງອ່ານແຮງໆ ແລະໃຫ້ຂີດກ້ອງສິ່ງທີ່ໂຢຊວຍໄດ້ໜູນໃຈໃຫ້ພວກອິສຣາເອັນຕິດພັນກັບພຣະເຈົ້າ.
23. ບອກທຸກຄົນເບິ່ງໂປສເຕີອັນທີສາມ ລື້ມຄືນ. ອ່ານໂຢຊວຍ 23:12-16 ເປັນສຽງດັງ ແລະບອກວ່າໂຢຊວຍໄດ້ເບິ່ງລື້ມຄືນເຖິງຄຳສັນຍາຕໍ່ພຣະເຈົ້າ. ເຫັນວ່າຖ້າພວກອິສຣາເອັນປະຕິບັດຕາມຄຳສັນຍາພວກເຂົາກໍໄດ້ຮັບພຣະພອນ. ແຕ່ຖ້າເມື່ອໃດພວກເຂົາຫລົງລືມຄຳສັນຍາວິບັດກໍໄດ້ຕາມມາ.
24. ເບິ່ງໂປສເຕີອັນທີສີ່ ເລີ້ມຕົ້ນໃໝ່. ອ່ານໂຢຊວຍ 23:14-16 ອອກສຽງດັງ. ກ່າວວ່າຖ້າປາສຈາກການເລີ້ມຕົ້ນຄວາມສັມພັນກັບພຣະເຈົ້າໃໝ່ແລ້ວ ເຫັນວ່າມັນເປັນໄປບໍ່ໄດ້ທີ່ຈະຖວາຍຕົວຕໍ່ພຣະອົງ. ເວົ້າຕໍ່ໄປວ່າມີຫລາຍຄົນເປັນຜູ້ຮັບໃຊ້ພຣະເຈົ້າໃນສມັຍເດີມແລະສມັຍນີ້ໄດ້ເຮັດຜິດ ແລະພວກເຂົາຕ້ອງເລີ້ມຕົ້ນຄວາມສັມມພັນກັບພຣະເຈົ້າໃໝ່ ດ້ວຍສາຣະພາບຜິດເພື່ອພຣະເຈົ້າຈະໄດ້ອະພັຍໃຫ້.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 7
# <u>ພັຍຂອງການຫລົງລືມຝ່າຍຈິດວິນຍານ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ພວກຜູ້ປົກຄອງ 2: 1-3, 6-22

**<u>ພູມຫລັງຂອງພຣະຄັມພີ</u>**: ພວກຜູ້ປົກຄອງ 1 ແລະ 2

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ຄົນແຕ່ລະຍຸກຮັບຜິດຊອບໃນການຕິດຕາມພຣະເຈົ້າ ແລະການຖ່າຍທອດຄວາມເຊື່ອຂອງເຂົາເຈົ້າ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ຄົນໃນຍຸກຂອງພວກເຮົາເອົາໃຈໃສ່ໃນການຖ່າຍທອດຄວາມເຊື່ອໄປເຖິງຄົນລຸ້ນຕໍ່ໄປບໍ່?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອສຳຣວດເບິ່ງການຖ່າຍທອດຄວາມເຊື່ອຂອງພວກເຮົາໄປເຖິງຄົນລຸ້ນຕໍ່ໄປ.

**<u>ອ່ານລວບ:</u>** ໃນລະຍະບໍ່ດົນຫລັງຈາກການເສັຽຊີວິດຂອງໂຢຊວຍ ແລະຜູ້ນຳໃນລຸ້ນຂອງທ່ານ, ຊາວອິສຣາເອນລຸ້ນຕໍ່ມາເລີ້ມຊຸດໂຊມໃນຄວາມເຊື່ອແລະຫັນໄປໄຫວ້ພຣະອື່ນ; ສິ່ງນັ້ນເປັນເຫດໃຫ້ພຣະເຈົ້າຕ້ອງໄດ້ຊົງລົງໂທດພວກເຂົາຄັ້ງແລ້ວຄັ້ງອີກ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຫລັງຈາກນັກຮຽນມາເຖິງ, ບອກໃຫ້ທຸກຄົນເບິ່ງຄຳວ່າ "ພວກຜູ້ປົກຄອງ" ທີ່ທ່ານໄດ້ຂຽນໄວ້ໃນກະດານ; ຂໍໃຫ້ຜູ້ນຶ່ງອະທິບາຍຄຳວ່າ "ປົກຄອງ" (ການປົກຄອງ ຊຶ່ງແມ່ນໜ້າທີ່ ຫລືຜູ້ປົກຄອງ ຊຶ່ງແມ່ນຜູ້ພິພາກສາ). ຄຳວ່າຜູ້ພິພາກສາເຮັດໃຫ້ພວກເຮົາຄິດເຖິງສານຊຶ່ງມີຜູ້ພິພາກສານັ່ງຕັດສິນເຣື່ອງ; ແຕ່ໃນພຣະສັນຍາເດີມພວກຜູ້ປົກຄອງມີໜ້າທີ່ໃນການພິພາກສາ ແຕ່ໜ້າທີ່ໃຫຍ່ແມ່ນເປັນແມ່ທັບນຳພາປະຊາຊົນໃນສມັຍທີ່ບໍ່ມີກະສັດ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

2. ບອກຫົວເຣື່ອງທີ່ຈະສຶກສາໃນມື້ນີ້ແມ່ນ "ພັຍຂອງການຫລົງລືມຝ່າຍຈິດວິນຍານ" ຊຶ່ງບອກເຖິງການຕັດສິນໃຈ ແລະຜົນທີ່ຕິດຕາມມາ. ໃຫ້ຜູ້ນຶ່ງເປັນພຍານວ່າມີຫຍັງເກີດຂຶ້ນເວລາລາວເຮັດຜິດກົດລະບຽບທີ່ພໍ່ແມ່ວາງໄວ້, ໃນສມັຍຍັງນ້ອຍ. ອ່ານ ພວກຜູ້ປົກຄອງ 2: 1-3 ແລະບອກໃຫ້ນັກຮຽນຟັງເບິ່ງວ່າມີຫຍັງແດ່ທີ່ໄພ່ພົນຂອພຣະເຈົ້າບໍ່ໄດ້ເຮັດຕາມສັນຍາທີ່ພວກຕົນໃຫ້ໄວ້ກັບພຣະເຈົ້າ.

3. ໃຫ້ຜູ້ນຶ່ງອ່ານ ພວກຜູ້ປົກຄອງ 2: 6-9. ເວົ້າເຖິງຄວາມສັດຊື່ຂອງໂຢຊວຍແລະພວກຜູ້ນຳທີ່ມີຊີວິດຢູ່ຫລັງຈາກນັ້ນ. ໃຫ້ຜູ້ນຶ່ງເປັນພຍານເຣື່ອງຄວາມສັດຊື່ຂອງພຣະເຈົ້າ ຊຶ່ງເຮັດໃຫ້ຄວາມເຊື່ອຂອງລາວຈະເຣີນຂຶ້ນ. ຖາມ: ເປັນຫຍັງການຈົດຈຳສິ່ງທີ່ພຣະເຈົ້າໄດ້ຊົງກະທຳໃນຊີວິດຂອງພວກເຮົາຈຶ່ງສຳຄັນ?
4. ເວົ້າວ່າ: ພວກຜູ້ນຳຫລັງຈາກໂຢຊວຍມີຄວາມເຊື່ອທີ່ເຂັ້ມແຂງ ແຕ່ເສັຽຢ່າງນຶ່ງຄືພວກເຂົາບໍ່ໄດ້ຖ່າຍທອດຄວາມເຊື່ອໄປເຖິງຄົນເຊັ່ນຕໍ່ໄປ. ອ່ານ ພວກຜູ້ປົກຄອງ 2: 10-13; ໃຫ້ທຸກຄົນຟັງເຫດທີ່ເຮັດໃຫ້ພວກເຂົາບໍ່ຮູ້ພຣະເຈົ້າແລະສິ່ງທີ່ພຣະອົງໄດ້ຊົງເຮັດຖ້າມກາງຊົນຊາດອິສຣາເອນ. ເນັ້ນການຖ່າຍທອດເຣື່ອງແລະປະສົບການກັບພຣະເຈົ້າໃຫ້ລູກຫລານເປັນເຣື່ອງປະບໍ່ໄດ້. ພານັກຮຽນຄິດເຖິງວິທີຕ່າງໆໃນການຖ່າຍທອດຄວາມເຊື່ອ.
5. ພວກຜູ້ປົກຄອງ 2: 14-19 ບອກເຖິງສິ່ງທີ່ເກີດຂຶ້ນກັບຄົນອິສຣາເອນຫລາຍໆ ເທື່ອໃນປະວັດສາດຂອງພວກເຂົາເຈົ້າ. ແບ່ງກະດານເປັນສີ່ພາກ ແລ້ວຂຽນຫົວຂໍ້ຕໍ່ໄປນີ້ໃສ່ (ທ່ານອາດຈະຕຽມໄວ້ລ່ວງໜ້າໃດ້ໃຊ້ໂປສເຕີ້): ການໄຫວ້ພຣະອື່ນ, ການຖືກຂົ່ມເຫງ, ການຖິ້ມໃຈເກົ່າ, ການປົດປ່ອຍ. ເບິ່ງພຣະຄຳຕອນນີ້ ແລ້ວໃຫ້ຜູ້ນຶ່ງຂຽນສິ່ງທີ່ອິສຣາເອນໄດ້ເຮັດ ໃສ່ຕາມຫົວຂໍ້ທີ່ໄດ້ຂຽນໄວ້ແລ້ວນັ້ນ. ເວົ້າວ່າສິ່ງທີ່ໜ້າເສົ້ານີ້ໄດ້ເກີດຂຶ້ນຫລາຍໆ ຄັ້ງໃນອິສຣາເອນ.
6. ອ່ານ ພວກຜູ້ປົກຄອງ 2: 20-22. ເວົ້າວ່າ: ຖ້າມກາງຄວາມບໍ່ສັດຊື່ຂອງປະຊາຊົນ, ພຣະເຈົ້າຍັງຊົງສະແດງຄວາມຮັກຕໍ່ໄພ່ພົນຂອງພຣະອົງ. ບອກນັກຮຽນໃຫ້ເບິ່ງຫລັກຖານເຣື່ອງຄວາມຮັກຂອງພຣະເຈົ້າໃນຕອນນີ້ (ສົ່ງຜູ້ປົກຄອງໄປປົດປ່ອຍພວກເຂົາ; ໃຊ້ປະເທດສັດຕຣູທົດສອບພວກເຂົາ ເພື່ອໃຫ້ໂອກາດກັບຄືນດີກັບພຣະອົງ).

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ເຕືອນນັກຮຽນວ່າ ມີໃຜແດ່ເຫັນພ້ອມ ຫລືບໍ່ເຫັນພ້ອມໃນຂໍ້ຄວາມຕໍ່ໄປນີ້: "ຄຣິສຕະຈັກສາມາດ ທີ່ຈະດັບສູນໄດ້ໃນເຊັ່ນຕໍ່ໄປ." ໃຫ້ຜູ້ທີ່ເຫັນພ້ອມແລະບໍ່ເຫັນພ້ອມອະທິບາຍຄວາມເຫັນຂອງພວກຕົນໂດຍເອົາຄອບຄົວ, ສັງຄົມ, ແລະປະເທດຊາດ ເປັນຫລັກ.
8. ໃຫ້ເວລາເພື່ອແຕ່ລະຄົນຈະໄດ້ພິສູດເບິ່ງການຖ່າຍທອດຄວາມເຊື່ອຂອງຕົນເອງວ່າໄດ້ຜົນຂນາດໃດ; ໃຫ້ບາງຄົນແບ່ງປັນວິທີທີ່ເກີດຜົນດີ. ອະທິຖານປິດ, ຂອບຄຸນພຣະເຈົ້າສຳລັບການຊົງປະທານແລະປົກປ້ອງຮັກສາ. ຂໍພຣະອົງໃຫ້ປົກປ້ອງຈາກສິ່ງທີ່ຈ່ອງດຶງບໍ່ໃຫ້ພວກເຮົາໄດ້ດຳເນີນຊີວິດທີ່ເປັນແບບຢ່າງໃນຄວາມເຊື່ອ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# <u>ເດໂບຣາ: ຜູ້ຍິງທີ່ດີເດັ່ນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ພວກຜູ້ປົກຄອງ 4: 1-22

**<u>ພູມຫລັງຂອງພຣະຄັມພີ:</u>** ພວກຜູ້ປົກຄອງ 4 ແລະ 5

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຈົ້າຊົງໃຊ້ຜູ້ຍິງຫລາຍຄົນເພື່ອໃຫ້ພຣະປະສົງສຳເຣັດ.

**<u>ຄຳຖາມເພື່ອຄົ້ນຄວ້າ:</u>** ຜູ້ຍິງຈະຮັບໃຊ້ພຣະເຈົ້າໄດ້ວິທີໃດ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອສຳຣວດເບິ່ງພາກສ່ວນຂອງເດໂບຣາໃນການຮັບໃຊ້ພຣະເຈົ້າ ແລະການປົດປ່ອຍອິສຣເອນ ວ່າຈະສອນສິ່ງໃດແດ່ເຣື່ອງພາກສ່ວນຂອງຜູ້ຍິງໃນການຮັບໃຊ້ສມັຍນີ້.

**<u>ອ່ານລວບ:</u>** ເວລາບາຣັກບໍ່ຍອມອອກສູ້ຮົບຖ້າບໍ່ມີນາງ, ເດໂບຣາໄດ້ນຳພາອິສຣາເອນໄປສູ່ຊັຍຊະນະຕໍ່ຊາວການາອານໂດຍການຊ່ວຍເຫລືອຂອງຍິງອີກຜູ້ນຶ່ງ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຖາມ, ຄົນສ່ວນຫລາຍມີຂໍ້ແກ້ຕົວຢ່າງໃດແດ່ ຈຶ່ງບໍ່ຍອມເຮັດຕາມການຊົງເອີ້ນໃຫ້ຮັບໃຊ້ຂອງພຣະເຈົ້າ? ໃຫ້ໂອກາດຕອບ. ຄຳຕອບອາດຈະມີ: ບໍ່ໝັ້ນໃຈ, ລະອາຍເພາະຄວາມບາບທີ່ຜ່ານມາ, ບໍ່ມີການສຶກສາພຽງພໍ--ຝ່າຍຈິດວິນຍານ, ເບິ່ງຕົວເອງຕ່ຳ, ວຽກຫລາຍຢູ່ແລ້ວ, ສົນໃຈເຣື່ອງເນື້ອໜັງຫລາຍ, ມີຈຸດອ່ອນ, ບັນຫາສຸຂພາບ, ແລະຄວາມຕ້ອງການຂອງສັງຄົມ. ເວົ້າວ່າ, ໃນການສຶກສາມື້ນີ້, ພວກເຮົາຈະເຫັນວ່າ ພຣະເຈົ້າໄດ້ຊົງໃຊ້ຜູ້ຍິງເພື່ອປົດປ່ອຍໄພ່ພົນຂອງພຣະອົງ ແລະຈະພິຈາຣະນາເບິ່ງເຣື່ອງໃນພຣະຄັມພີເພື່ອທຽບໃສ່ການຮັບໃຊ້ຂອງຜູ້ຍິງໃນສມັຍນີ້.
2. ໃຫ້ຄຳເຫັນເຣື່ອງການຮັບໃຊ້ຂອງຜູ້ຍິງໃນພັນທະກິດຂອງພຣະເຈົ້າໃນປັດຈຸບັນ ແລະເບິ່ງຜູ້ຍິງໃນພຣະຄັມພີ; ໃຫ້ທຸກຄົນໄດ້ເຫັນຄວາມສຳຄັນຂອງຜູ້ຍິງໃນວຽກງານຂອງພຣະເຈົ້າ. ແນະນຳໃຫ້ທຸກຄົນຮຽນແບບເປີດໃຈ ເພາະບາງຄົນອາດຈະບໍ່ເຫັນພ້ອມກັບການຮັບໃຊ້ຂອງຜູ້ຍິງໃນຄຣິສຕະຈັກ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ເວົ້າວ່າ, ບົດຮຽນນີ້ເລີ້ມຕົ້ນດ້ວຍຂໍ້ຄວາມທີ່ພວກເຮົາຄຸ້ນເຄີຍດີຄື ຊົນຊາດອິສຣາເອນເຮັດບາບຕໍ່ສູ້ພຣະເຈົ້າ, ພຣະເຈົ້າຈຶ່ງຊົງມອບພວກເຂົາໃຫ້ຢູ່ໃຕ້ອຳນາດຂອງປະເທດສັດຕຣູ, ປະຊາຊົນຮ້ອງໄຫ້ຫາພຣະເຈົ້າ, ແລ້ວພຣະອົງຊົງປົດປ່ອຍພວກເຂົາຈາກອຳນາດຂອງສັດຕຣູ. ໃຫ້ຜູ້ນຶ່ງອ່ານ ພວກຜູ້

ປົກຄອງ 4: 1-3; ບອກນັກຮຽນເບິ່ງສອງຢ່າງທຳອິດທີ່ເວົ້າກັນມາ: ຕໍ່ສູ້ພຣະເຈົ້າ ແລະຢູ່ໃຕ້ອຳນາດຂອງສັດຕຣູ.

4. ໃຫ້ແຕ່ລະຄົນອ່ານແບບງຽບໆ ຜປ 1: 4-5.ຖາມ:ເດໂບຣາແມ່ນໃຜ? ຖ້າມີຜູ້ຕອບວ່າ "ຜູ້ທຳນວາຍ" ໃຫ້ຖາມວ່າ: ທ່ານຄິດວ່າ ນາງສາມາດບອກເຖິງເຣື່ອງອະນາຄົດບໍ່? ຫລັງຈາກນັ້ນໃຫ້ອະທິບາຍໜ້າທີ່ຂອງຜູ້ທຳນວາຍໃນພຣະສັນຍາເດີມ (ຜູ້ທຳນວາຍເປັນບຸກຄົນທີ່ພຣະເຈົ້າຊົງເອີ້ນ ແລະ ພຣະອົງໄດ້ປະທານຈິດວິນຍານຮູ້ສັງເກດດີຊົ່ວ ແລະສາມາດເຂົ້າໃຈເຖິງນ້ຳພຣະທັຍແລະພຣະປະສົງ). ເດໂບຣາປະກາດຄວາມຈິງຂອງພຣະເຈົ້າ.
5. ອ່ານ ຜປ 4: 6-10. ຖາມ: ບາຣັກໄດ້ມາຫາເດໂບຣາໂດຍບໍ່ມີການຂັດຂ້ອງ ແຕ່ເປັນຫຍັງລາວບໍ່ຍອມອອກຮົບເສິກຖ້າເດໂບຣາບໍ່ໄປນຳ?(ຄຳຕອບອາດຈະແມ່ນ:ເດໂບຣາສາມາດໜູນໃຈທະຫານ, ບາຣັກສາມາດໂທດເດໂບຣາຖ້າມີການເສັຽຊັຍ, ບາຣັກຕ້ອງການຄວາມສາມາດຂອງເດໂບຣາ). ຖາມ: ທ່ານເຄີຍເຊື່ອສິ່ງທີ່ຕາເຫັນ ຫລາຍກວ່າເຊື່ອພຣະເຈົ້າທີ່ຕາບໍ່ເຫັນບໍ່?
6. ອ່ານ ຜປ 4: 11-16. ບອກທຸກຄົນໃຫ້ຕັ້ງໃຈຟັງລາຍລະອຽດຂອງການສູ້ຮົບລະຫວ່າງທະຫານອິສຣາເອນ ແລະກອງທັບຂອງນາຍພົນ ຊີເຊຣາ. ໃຫ້ບາງຄົນໃຫ້ຄວາມເຫັນ ໂດຍສະເພາະກ່ຽວກັບການປະພຶດແລະທ່າທີຂອງບາຣັກ (ບາຣັກເຮັດຕາມຄຳສັ່ງຂອງເດໂບຣາຊຶ່ງມາຈາກພຣະເຈົ້າ; ຄວາມກ້າຫານແລະຄວາມສາມາດໃນການນຳພາທະຫານ).
7. ເບິ່ງ ຜປ 4: 11 ກ່ຽວກັບເຮເບຊາວເກນິດ; ຫລັງຈາກນັ້ນໃຫ້ອ່ານ ຜປ 4: 17-22. ບັລຍາຍສິ່ງທີ່ເກີດຂຶ້ນຊຶ່ງນຳໄປສູ່ການເສັຽຊີວິດຂອງ ຊີເຊຣາ ແລະການປົດປ່ອຍຊົນຊາດອິສຣາເອນຂອງພຣະເຈົ້າ. ເບິ່ງຄຳເວົ້າຂອງເດໂບຣາໃນ ຜປ 4: 9 ອີກເທື່ອນຶ່ງທີ່ວ່າ "ອົງພຣະຜູ້ເປັນເຈົ້າຈະມອບຊີເຊຣາໄວ້ຢູ່ໃນເງື້ອມມືຂອງຍິງຄົນນຶ່ງ." ບາຣັກຄົງຄິດວ່າ ຜູ້ຍິງຄົນນັ້ນຄົງແມ່ນ ເດໂບຣາ, ແຕ່ຜູ້ຍິງຜູ້ນັ້ນແມ່ນຄົນຕ່າງຊາດທີ່ບໍ່ມີໃຜຮູ້ຈັກ ຊື່ວ່ານາງຢາເອນ.

## ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

8. ຖາມ: ຄຣິສຕະຈັກຂອງພວກເຮົາຈະໜູນໃຈຜູ້ຍິງທີ່ຮັບໃຊ້ໃນພັນທະກິດຂອງພຣະເຈົ້າໃນຄຣິສຕະຈັກວິທີໃດ? ໃຫ້ເວລາເພື່ອການສົນທະນາ; ຫລັງຈາກນັ້ນ ຖາມ: ຕຳແໜ່ງແລະໜ້າທີ່ສຳຄັນໄດ້ຖືກມອບໝາຍໃຫ້ຄົນປະເພດເດໂບຣາ (ຜູ້ຢູ່ເບື້ອງໜ້າ) ແລະຄົນປະເພດນາງຢາເອນ (ຜູ້ຢູ່ເບື້ອງຫລັງ) ບໍ່? ເຕືອນວ່າຕຳແໜ່ງທີ່ຢູ່ເບື້ອງໜ້າ ແລະຕຳແໜ່ງທີ່ເບື້ອງຫລັງມີຄວາມສຳຄັນໃນຄຣິສຕະຈັກຂອງພວກເຮົາ.
9. ປິດການສຶກສາພຣະຄຳໂດຍການອ່ານ ເອເຟໂຊ 4: 11-13. ນຳການອະທິຖານຂອບພຣະຄຸນພຣະເຈົ້າຜູ້ຊົງສ້າງພວກເຮົາໃຫ້ເປັນຜູ້ຍິງແລະຜູ້ຊາຍແລະຈັດຕຽມແຕ່ລະຄົນ ພ້ອມຊົງໃຫ້ຂອງພຣະຣາຊທານແລະຄວາມສາມາດໃນການຮັບໃຊ້ໃນຄຣິສຕະຈັກ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ກີເດໂອນ: ຕໍ່ສູ້ຄວາມສົງສັຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພວກຜູ້ປົກຄອງ 6: 1-2, 11-28, 36-40

**ພູມຫລັງຂອງພຣະຄັມພີ**: ພວກຜູ້ປົກຄອງ 6

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະເຈົ້າຊົງເຂົ້າໃຈຄວາມສົງສັຍຂອງພວກເຮົາ, ແຕ່ໃນທີ່ສຸດພວກເຮົາຈຳຕ້ອງຕິດຕາມການນຳພາຂອງພຣະອົງ.

**ຄຳຖາມເພື່ອຄົ້ນຄວ້າ**: ການມີຄວາມສົງສັຍໃນແຜນການຂອງພຣະເຈົ້າຜິດບໍ່?

**ຈຸດປະສົງຂອງການສຶກສານີ້:** ເພື່ອເອົາຊະນະຄວາມສົງສັຍດ້ວຍການກ້າວຕໍ່ໄປໂດຍການເຊື່ອຟັງໃນການດຳເນີນຊີວິດໃນພຣະເຈົ້າ.

**ອ່ານລວບ:** ຫລັງຈາກໄດ້ຮັບການຊົງເອີ້ນໃຫ້ປົດປ່ອຍຊົນຊາດອິສຣາເອນຈາກພວກມີດີອານ, ກີເດໂອນສະແດງຄວາມສົງສັຍກ່ຽວກັບແຜນການຂອງພຣະເຈົ້າ ແລະລາວໄດ້ທົດສອບພຣະເຈົ້າເພື່ອຄວາມໝັ້ນໃຈໃນການຊົງເອີ້ນ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນວັນຮຽນໃຫ້ຕຽມໂປສເຕີ້ໄວ້ສາມໃບ; ແຕ່ລະໃບໃຫ້ຂຽນຄວາມໝາຍຂອງຄຳວ່າ “ສົງສັຍ” ໄວ້ດັ່ງນີ້:
    - ບໍ່ແນ່ໃຈ (ໃນສິ່ງນັ້ນ)
    - ເຊື່ອວ່າ (ສິ່ງນັ້ນ) ອາດຈະບໍ່ເປັນຈິງ
    - ບໍ່ໝັ້ນໃຈ (ໃນສິ່ງນັ້ນ ຫລືຄົນນັ້ນ)

    - ຕິດໂປສເຕີ້ໄວ້ຂ້າງຝາຫ້ອງຮຽນ

2. ຫລັງຈາກນັກຮຽນມາເຖິງ, ບອກເຂົາເຈົ້າໃຫ້ເບິ່ງໂປສເຕີ້ທີ່ມີຄວາມໝາຍຂອງຄຳວ່າສົງສັຍ; ໃຫ້ນັກຮຽນແປຄຳວ່າສົງສັຍ; ເປີດໂອກາດໃຫ້ຜູ້ນຶ່ງແບ່ງປັນເຣື່ອງລາວເຄີຍສົງສັຍ. ແນະນຳວ່າໃນພຣະຄັມພີມີເຣື່ອງຂອງຄົນຂີ້ສົງສັຍຫລາຍຄົນ ແລະບອກວ່າມື້ນີ້ຈະສຶກສາເຣື່ອງ ກີເດໂອນຜູ້ມີຄວາມສົງສັຍ ແລະເບິ່ງເຫດການຫລັງຈາກທີ່ລາວໄດ້ພົບອົງພຣະຜູ້ເປັນເຈົ້າຕໍ່ໜ້າ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອະທິບາຍຄວາມເປັນມາຂອງພວກມີດີອານໂດຍໃຊ້ບົດຮຽນຊ່ວຍ (ທ່ານອາດຈະຄົ້ນຄວ້າມາເພີ້ມ). ໃຫ້ຜູ້ນຶ່ງອ່ານ ພວກຜູ້ປົກຄອງ 6: 1-2.
4. ເລືອກນັກຮຽນສອງຄົນໃຫ້ອ່ານ ພວກຜູ້ປົກຄອງ ຫລື ຜປ 6: 11-28; ຜູ້ນຶ່ງໃຫ້ອ່ານຄໍາເວົ້າຂອງກິເດໂອນ ແລະອີກຜູ້ນຶ່ງໃຫ້ອ່ານພຣະຄໍາຂອງພຣະເຈົ້າ (ເທວະດາ). ຫລັງຈາກອ່ານແລ້ວໃຫ້ຖາມດັ່ງຕໍ່ໄປນີ້:
    - ມີຫຍັງຄືພື້ນຖານໃນຄໍາຕອບຄໍາທໍາອິດຂອງກິເດໂອນ ຕໍ່ເທວະດາຂອງພຣະເຈົ້າ?
    - ພຣະເຈົ້າຊົງສັ່ງກິເດໂອນໃຫ້ເຮັດຫຍັງ?
    - ເປັນຫຍັງກິເດໂອນຈຶ່ງພຍາຍາມປະຕິເສດຄໍາສັ່ງຂອງພຣະເຈົ້າໃຫ້ທໍາລາຍພວກມີດີອານ?
    - ຈາກການພົບກັນໜ້າຕໍ່ໜ້າ, ພຣະເຈົ້າຊົງໃຫ້ຄວາມໝັ້ນໃຈໃນຊັຍຊະນະຢ່າງໃດຕໍ່ກິເດໂອນ?
    - ການນະມັສການມີຄວາມສໍາຄັນຢ່າງໃດໃນການພົບກັນລະຫວ່າງພຣະເຈົ້າແລະກິເດໂອນ?
5. ເວົ້າວ່າ: ຄວາມສົງສັຍຂອງກິເດໂອນບໍ່ໄດ້ໝົດໃນຕອນນີ້. ອ່ານ ຜປ 6: 36-40. ໃຫ້ທຸກຄົນເບິ່ງຂໍ້ 34 ທີ່ວ່າ "ພຣະວິນຍານຂອງອົງພຣະຜູ້ເປັນເຈົ້າ ໄດ້ລົງມາຄວບຄຸມກິເດໂອນ." ໃຊ້ບົດຮຽນໃນຫົວຂໍ້ "ຂໍໝາຍສໍາຄັນອີກ" ເພື່ອຊ່ວຍການສົນທະນາ ແລະຄໍາຖາມວ່າ, ເປັນຫຍັງພຣະເຈົ້າຈຶ່ງຊົງມີຄວາມອົດທົນຕໍ່ກິເດໂອນ?
6. ປິດການສຶກສາພຣະຄໍາໂດຍບອກວ່າກິເດໂອນໄດ້ເຮັດທຸກຢ່າງທີ່ພຣະເຈົ້າໄດ້ຊົງເອີ້ນລາວໃຫ້ເຮັດ. ກິເດໂອນໄດ້ນໍາພວກອິສຣາເອນສູ່ຊັຍຊະນະຕໍ່ພວກມີດີອານ ແລະລາວໄດ້ຮັບໃຊ້ພຣະເຈົ້າຢ່າງສັດຊື່.

## <u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ຖາມ: ເປັນຫຍັງພວກເຮົາບາງຄັ້ງເກີດມີຄວາມສົງສັຍເໝືອນດັ່ງກິເດໂອນ? ໃຫ້ເວລາຕອບ; ຂຽນເຫດຜົນທັງຫລາຍໄວ້ໃນກະດານ; ໃຊ້ເວລາຊອກຄໍາຕອບສໍາລັບເຫດຜົນທີ່ນັກຮຽນໄດ້ບອກມາ. ຫລັງຈາກນັ້ນໃຫ້ຖາມວ່າ: ພວກເຮົາຕ້ອງການ ການຊົງນໍາພາຫລາຍປານໃດ ກ່ອນທີ່ຈະຕິດຕາມພຣະເຈົ້າ? ພວກເຮົາອາດຈະຕ້ອງການແຜນທີ່, ແຕ່ພຣະເຈົ້າຈະຊົງເປີດເຜີຍແຕ່ລະຂັ້ນຕອນເວລາພວກເຮົາຍອມເຊື່ອຟັງ.
8. ແນະນໍາໃຫ້ນັກຮຽນໃຊ້ "ຄໍາຖາມເພື່ອພິຈາຣະນາ" ໃນບົດຮຽນເພື່ອເປັນວິທີໃນການແກ້ໄຂຄວາມສົງສັຍໃນການຕິດຕາມແຜນການຂອງພຣະເຈົ້າສໍາລັບຊີວິດ. ອະທິຖານປິດ; ຍອມຮັບວ່າທຸກຄົນຍ່ອມຈະມີເວລາສົງສັຍ ແຕ່ພຣະເຈົ້າຊົງຮູ້ພວກເຮົາ. ອ້ອນວອນຂໍຄວາມກ້າຫານ ແລະກໍາລັງເພື່ອໃຫ້ທຸກຄົນສາມາດເອົາຊະນະຄວາມສົງສັຍເພື່ອຈະໄດ້ກ້າວຕໍ່ໄປກັບພຣະເຈົ້າ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# <u>ກີເດໂອນ: ຊະນະຕາມວິທີຂອງພຣະເຈົ້າ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ພວກຜູ້ປົກຄອງ 7: 2-8, 15-22

**<u>ພູມຫລັງຂອງພຣະຄັມພີ</u>**: ພວກຜູ້ປົກຄອງ 7

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພວກເຮົາສາມາດທີ່ຈະເຊື່ອພຣະເຈົ້າວ່າພຣະອົງຊົງສາມາດປະທານທຸກສິ່ງສຳລັບຊັຍຊະນະໃນຊີວິດ.

**<u>ຄຳຖາມເພື່ອຄົ້ນຄ້ວາ</u>**: ເປັນຫຍັງພວກເຮົາຈຶ່ງເຊື່ອວ່າພຣະເຈົ້າຊົງສາມາດປະທານທຸກສິ່ງສຳລັບຊັຍຊະນະໃນຊີວິດ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອຈະເຊື່ອວ່າພຣະເຈົ້າສາມາດປະທານທຸກສິ່ງເພື່ອຊັຍຊະນະໃນຊີວິດ.

**<u>ອ່ານລວບ:</u>** ບາງຄັ້ງພວກເຮົາອາດຈະເຫັນວ່າຊັຍຊະນະເປັນໄປບໍ່ໄດ້, ແຕ່ພຣະເຈົ້າຈະຊົງສະແດງຫົນທາງສູ່ຄວາມສຳເຣັດ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ເລີ້ມການສຶກສາພຣະຄຳໂດຍພານັກຮຽນຄິດພິຈາຣະນາເຣື່ອງຕໍ່ໄປນີ້: ຖ້າທ່ານສາມາດນຳເອົາຂອງສາມຢ່າງເພື່ອໄປຢູ່ເກາະທີ່ປ່ຽວທີ່ສຸດ ທ່ານຈະເອົາຫຍັງໄປນຳແດ່? ໃຫ້ແຕ່ລະຄົນຂຽນສິ່ງທີ່ເຂົາເຈົ້າຈະເອົາຕິດຕົວໄປ; ໃຊ້ເວລາເລັກນ້ອຍ. ຫລັງຈາກນັ້ນໃຫ້ໂອກາດບາງຄົນແບ່ງປັນວ່າໄດ້ເລືອກຫຍັງແດ່ສາມຢ່າງນັ້ນ. ແລ້ວເວົ້າວ່າ: ພວກເຮົາຕ່າງກໍຮູ້ວ່າມີຫຍັງແດ່ທີ່ຈຳເປັນຖ້າພວກເຮົາຕ້ອງການຊັຍຊະນະຕໍ່ອຸປສັກໃນຊີວິດ. ບົດຮຽນນີ້ຈະເຕືອນພວກເຮົາວ່າພຣະເຈົ້າຊົງປະທານທຸກຢ່າງທີ່ຈຳເປັນໃຫ້ພວກເຮົາເພື່ອຈະມີຊັຍຊະນະໃນຊີວິດ.
2. ຂຽນຄຳວ່າ “ຊະນະ” ໃສ່ໄວ້ຂ້າງເທິງຂອງກະດານ. ພາການສົນທະນາດັ່ງຕໍ່ໄປນີ້: “ໃນຖານະເປັນຄຣິສຕຽນ, ມີຫຍັງແດ່ທີ່ເປັນແບບຢ່າງຊັຍຊະນະໃນຊີວິດພວກເຮົາ? ຂຽນຄຳຕອບໃສ່ກະດານ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ຊອກຫາຮູບສອງຫລືສາມຢ່າງທີ່ມີຄົນແກ່ຂອງໂດຍໃຊ້ມ້າມີລໍ້ ຫລືຄົນຍົກເຄື່ອງໜັກດ້ວຍຟ໊ອກລິຟເພື່ອຊ່ວຍໃຫ້ຊີວິດພວກເຂົາເຈົ້າງ່າຍຂຶ້ນ; ໃຫ້ພວກເຮົາຄິດວ່າຖ້າບໍ່ມີສິ່ງຕ່າງໆໃນທຳນອງນີ້ ການ

ຍ້າຍບ້ານ ຫລືການຍົກຂອງໜັກໃນໂຮງງານຄົງຈະໃຊ້ເວລາແລະມີຄວາມລຳບາກຫລາຍ. ຄົນໃນຮູບນັ້ນໄດ້ໃຊ້ເຄື່ອງມືຊ່ວຍ ເພື່ອຈະໄດ້ສຳເຣັດວຽກງານຂອງເຂົາເຈົ້າ.

4. ໃຫ້ຜູ້ນຶ່ງອ່ານ ພວກຜູ້ປົກຄອງ 7: 1-8. ເບິ່ງຂໍ້ 2-4 ອີກແລະເວົ້າວ່າ, ຊາວອິສຣາເອນຈະສາມາດເອົາຊະນະພວກມີດີອານເພາະພຣະເຈົ້າຊົງຢູ່ຝ່າຍເຂົາເຈົ້າ. ຄຳຖາມເພື່ອສົນທະນາ: ກີເດໂອນຮູ້ສຶກຢ່າງໃດໃນສິ່ງທີ່ພຣະເຈົ້າຊົງເອີ້ນໃຫ້ລາວເຮັດ? ທ່ານເຄີຍມີປະສົບການໃນທຳນອງທີ່ວ່າ ຖ້າພຣະເຈົ້າບໍ່ຊົງຢູ່ດ້ວຍທ່ານຈະບໍ່ສາມາດເຮັດໄດ້ດ້ວຍຕົນເອງ? ເນັ້ນວ່າການຊົງຢູ່ແລະຣິດເດດຂອງພຣະເຈົ້າສາມາດຊ່ວຍພວກເຮົາເຮັດໃນສິ່ງທີ່ພວກເຮົາບໍ່ເຄີຍເຮັດດ້ວຍຕົນເອງມາກ່ອນ.
5. ໃຫ້ຜູ້ນຶ່ງອ່ານ ຜປ 7: 15-22. ຊີ້ໃຫ້ທຸກຄົນເຫັນວ່າກີເດໂອນຕອບຮັບຄວາມສັດຊື່ຂອງພຣະເຈົ້າດ້ວຍການນະມັສການພຣະອົງ (7: 15), ແລະການນະມັສການຂອງລາວກໍຕິດຕາມດ້ວຍການລົງມືທຳງານ. ພານັກຮຽນຄົ້ນຄວ້າຄວາມສັມພັນລະຫວ່າງການນະມັສການ ແລະການເຮັດໃນສິ່ງທີ່ພຣະເຈົ້າຊົງເອີ້ນໃຫ້ເຮັດ.
6. ຂຽນສອງຫົວຂໍ້ນີ້ໃສ່ກະດານ: "ກີເດໂອນແລະຄົນຂອງລາວ" ແລະ "ພຣະເຈົ້າ." ໃຫ້ຜູ້ນຶ່ງອ່ານ ຜປ 7: 15-22 ອີກ; ບັນທຶກສິ່ງທີ່ກຳລັງເກີດຂຶ້ນໃສ່ກະດານ ຕາມແຕ່ລະຫົວຂໍ້. ຕົວຢ່າງ: ຂໍ້ 15, ກີເດໂອນນະມັສການ. ຫລັງຈາກອ່ານແລ້ວໃຫ້ຖາມນັກຮຽນວ່າ ອັນນີ້ຢູ່ໃນຫົວຂໍ້ໃດ? (ກີເດໂອນແລະຄົນຂອງລາວ); ແລະໃຫ້ເຮັດຕໍ່ໆໄປຈົນຮອດຂໍ້ສຸດທ້າຍ. ຫລັງຈາກເຮັດແລ້ວໃຫ້ສຳຣວດເບິ່ງແມ່ນຫຍັງແດ່ທີ່ກີເດໂອນແລະຄົນຂອງລາວເຮັດ ແລະແມ່ນຫຍັງແດ່ທີ່ພຣະເຈົ້າຊົງເຮັດ. ເນັ້ນວ່າ, ຄວາມພຍາຍາມຂອງມະນຸດຈະຈົບຢູ່ທີ່ຄວາມວ່າງເປົ່າ; ອ່ານ ຜປ 6: 12 ແລະ 14 ເພື່ອເຕືອນວ່າແມ່ນຫຍັງເປັນຈຸດເລີ້ມຕົ້ນສຳລັບກີເດໂອນ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ພານັກຮຽນຕອບ "ຄຳຖາມເພື່ອພິຈາຣະນາ" ໃນພາກສຸດທ້າຍຂອງບົດຮຽນນີ້.
8. ນຳພາການອ້ອນວອນເພື່ອໃຫ້ທຸກຄົນມີຄວາມເຊື່ອເພີ້ມຂຶ້ນ ແລະເພື່ອຈະໄດ້ໄວ້ວາງໃຈວ່າພຣະເຈົ້າຈະຊົງປະທານທຸກຢ່າງທີ່ຂາດເຂີນເພື່ອຊັຍຊະນະໃນຊີວິດ.

*ສຄ*

## **ຄຳແນະນຳສຳລັບຄຣູສອນ**

## **ບົດຮຽນທີ 11**

## **<u>ເຢັບທາຜູ້ພິຊິດ</u>**

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ພວກຜູ້ປົກຄອງ 11:1-6, 28-40

**<u>ພູມຫລັງຂອງພຣະຄັມພີ:</u>** ພວກຜູ້ປົກຄອງ 11

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການສັນຍາກັບພຣະເຈົ້າແບບໂງ່ເປັນອັນຕະລາຍ

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເພື່ອຊອກຄົ້ນຫາຄຳສັນຍາອັນດີ

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອຫລີກເວັ້ນຄຳສັນຍາທີ່ເປັນອັນຕະລາຍແກ່ຕົນ

## **<u>ບົດນຳ</u>**

ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ໄດ້ໃຊ້ພຣະຄັມພີເຫລັ້ມສີຟ້າຫລືສີຂຽວ ແຕ່ໄດ້ແປງຄຳເວົ້າເປັນບາງວັກບາງຕອນ ແລະບົດຮຽນນີ້ມີແຕ່ສອງຫົວຂໍ້ໃຫຍ່ເທົ່ານັ້ນ ແລະຖືກແປອອກມາຈາກພາສາອັງກິດປະມານຫ້າສິບເປີເຊັນເພື່ອໃຫ້ສອດຄ່ອງກັບຄວາມຄຶດຈິດໃຈຂອງຄົນລາວ. ຄຳແນະນຳອັນສຳຄັນ ແມ່ນໃຫ້ຄຣູອ່ານບົດ 11 ທັງໝົດກ່ອນຈະສອນ ແລ້ວຈະເຂົ້າໃຈໃນຂໍ້ເລິກລັບຂອງເຣື່ອງ.

### **<u>ມະນຸດບໍ່ຮັບ ແຕ່ພຣະເຈົ້າເລືອກ</u> (ພວກຜູ້ປົກຄອງ 11:1-28).**

1. ເມື່ອຂຽນຫົວຂໍ້ຂ້າງເທິງໃສ່ກະດານແລ້ວທ່ານອາດຈະຂໍໃຫ້ຜູ້ນຶ່ງຫລືສອງຄົນອ່ານຂໍ້ 1 ເຖິງ 28 ທັງນີ້ກໍເພື່ອວ່າໃຫ້ນັກຮຽນໄດ້ມີສ່ວນໃນການຮຽນວັນນີ້.
2. ຄຣູແບ່ງຄຳອະທິບາຍດັ່ງນີ້:
    - ຂໍ້ 1 ຜູ້ນຳເຜົ່າກີເລອາດ ມີລູກຊາຍນຳ(ເມັຽນ້ອຍ), ເປັນຍິງໂສເພນີ ຊື່ເຢັບທາ.
    - ຂໍ້ 2 ຜູ້ນຳເຜົ່າກີເລອາດ ຍັງມີລູກຊາຍອີກຫລາຍຄົນທີ່ເກີດກັບເມັຽແທ້, ເຂົາເປັນອ້າຍຂອງເຢັບທາໄດ້ໄລ່ເຢັບທາໜີອອກຈາກບ້ານເພາະຢ້ານລາວມາແບ່ງຊັບສົມບັດຂອງພໍ່ .
    - ຂໍ້ 3 ເຢັບທາໜີໄປຢູ່ເມືອງໂຕເບ ໂດຍໃຊ້ຊີວິດເປັນນັກເລງ ຈົນກາຍເປັນຫົວໜ້ານັກເລງ.
    - ຂໍ້ 4 ເກີດເສິກຣະຫວ່າງ ຄົນອຳໂມນແລະຄົນອິສຣາເອນ, ເຢັບທາເປັນຊົນຊາດນ້ອຍໃນອິສຣາເອນ.
    - ຂໍ້ 5-6 ໃນຂະນະເກີດເສິກພວກເຈົ້ານາຍຂອງເຜົ່າກີເລອາດສູ້ເຂົາບໍ່ໄດ້ ຈຶ່ງໄປເຊີນເອົາເຢັບທາມາເປັນນາຍຕໍ່ສູ້ກັບຊາວອຳໂມນ.
    - ຂໍ້ 7-11 ເຢັບທາຕໍ່ວ່າເຂົາແລ້ວຄືນໄປບ້ານເກີດ ເພື່ອຕໍ່ສູ້ປົກປ້ອງດິນແດນ ດ້ວຍການເປັນນາຍເຂົາ.
    - ຂໍ້ 12-28 ເຢັບທາໃຊ້ທູດໄປເຈຣະຈາເພື່ອຫລີກເວັ້ນສົງຄາມ ແຕ່ຝ່າຍກະສັດອຳໂມນບໍ່ຫົວຊາ.

## **ຕື່ນເຕັ້ນທີ່ຊະນະ ແລະຄຳສັນຍາໜ້າສລົດໃຈ ( 11:29-40).**

1. ຂໍໃຫ້ຜູ້ນຶ່ງຫລືສອງຄົນອ່ານ ຂໍ້ 29-40

2. ເບິ່ງວິທີການສອນແລະແປຕາມຫົວຂໍ້ຂ້າງລຸ່ມນີ້;

ຂໍ້ 29 ພຣະເຈົ້າຊົງນຳເຢັບທາ

ຂໍ້ 30-31 ເຢັບທາສັນຍາຕໍ່ພຣະເຈົ້າ (ອ່ານທັງສອງຂໍ້).

ຂໍ້ 32-33 ເຢັບທາເຮັດເສິກຕໍ່ສູ້ຊາວອຳໂມນ ແລ້ວພຣະເຈົ້າໃຫ້ເຢັບທາຊະນະ.

ຂໍ້ 34 ເຢັບທາກັບຈາກຊັຍຊະນະສົງຄາມ ເມື່ອຮອດບ້ານຂອງລາວຊື່ວ່າ ມິສະປາ ລູກສາວຄົນດຽວຂອງລາວຕື່ນເຕັ້ນແລະດີໃຈຫລາຍຈຶ່ງແລ່ນເຕັ້ນລຳໄປຮັບພໍ່.

ຂໍ້ 35 ເຢັບທາເປັນທຸກເມື່ອຄຶດເຫັນຄຳສັນຍາຂອງຕົນ. ( ອ່ານຄຳສັນຍາຂໍ້ 35).

ຂໍ້ 36 ລູກສາວເຢັບທາຍອມຮັບສະພາບແລະເລົ້າໂລມໃຈເຢັບທາຜູ້ເປັນພໍ່ (ຄຣິສຕຽນຄວນຮຽນແບບຢ່າງເລົ້າໂລມໃຈກັນໃຫ້ເຮັດຕາມສັນຍາ).

ຂໍ້ 37-38 ຄຳຂໍຮ້ອງຂອງລູກສາວເຢັບທາ ແລະເຢັບທາເຫັນພ້ອມ.

ຂໍ້ 39 ເຢັບທາຖວາຍລູກສາວເປັນເຄື່ອງບູຊາ.

ຂໍ້ 40 ກາຍເປັນທຳນຽມຂອງຍິງສາວອິສຣເອນ.

3. ເລົ່າເຣື່ອງນັກສາສນາສາດມີຄຳເຫັນໃນເຣື່ອງຂອງລູກສາວເຢັບທາ.

4. **ຄຳຖາມ**: ໃຫ້ໃຊ້ຄຳຖາມໃນບົດສອນເພື່ອໃຫ້ນັກຮຽນໄດ້ເອົາໄປຄຶດ ແລະນຳໃຊ້ໃນຊີວິດ.

*ທວ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 12
## ຜົນເສັຽຂອງການເຮັດຕາມໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພວກຜູ້ປົກຄອງ 13:1-5; 14:1-9; 16:1-5, 20-30

**ພູມຫລັງຂອງພຣະຄັມພີ:** ພວກຜູ້ປົກຄອງ 11-16

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມທະນົງຕົວ ແລະເຫັນແກ່ຕົວນຳໄປເຖິງອັນຕະລາຍແລະຍັງເສັຽໂອກາດອີກ.

**ຄຳຖາມເພື່ອການຄົ້ນຄວ້າ:** ເພື່ອສລຸບເບິ່ງການທະນົງຕົວແລະການເຫັນແກ່ຕົວຂອງຂ້ອຍເປັນຜົນສະທ້ອນຕໍ່ພຣະເຈົ້າແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຫລີກເວັ້ນບໍ່ໃຫ້ເປັນຄົນທະນົງຕົວແລະເຫັນແກ່ຕົວ.

## ບົດນຳ

1. ຈົ່ງເລົ່າເຣື່ອງຂອງຊາຍໜຸ່ມເປັນການເລີ້ມດັ່ງນີ້; ທ້າວເດດເປັນຊາຍໜຸ່ມເຈົ້າຊູ້, ເປັນຄົນສລາດຮຽນໜັງສືເກັ່ງ, ຫລິ້ນກິລາກໍເກັ່ງ, ຫລິ້ນດົນຕຣີກໍເປັນ, ຮ້ອງເພງກໍມ່ວນ ແຖມຍັງເປັນລູກຂອງຄົນລວຍອີກຊໍ້າ ລາວມີໝົດທຸກຢ່າງ ສິ່ງທັງໝົດນີ້ເຮັດໃຫ້ລາວເປັນຊາວໜຸ່ມນິສັຍບໍ່ດີຂີ້ອວດ ເຖິງປານນັ້ນພໍ່ແມ່ຂອງລາວກໍພ້ອມລາວທຸກຢ່າງ ແມ່ນແຕ່ລາວຜິດຕໍ່ເພື່ອນຝູງ ຫລືກົດຣະບຽບໂຮງຮຽນພໍ່ແມ່ກະຍັງພ້ອມລາວຢູ່, ດັ່ງນັ້ນຄວາມດີຫລາຍຢ່າງທີ່ລາວມີຢູ່ຈຶ່ງໃຊ້ໃນສັງຄົມບໍ່ໄດ້.

2. ທ່ານໄດ້ເອົາໃຈລູກຫລືຫລານແນວນີ້ບໍ່? ບາງທີ່ທ່ານບໍ່ຮູ້ວ່າທ່ານເຮັດແນວນີ້ດອກ ນອກຈາກທ່ານສາມາດຮັບຄວາມຈິງໃຫ້ຜູ້ອື່ນບອກ, ແຕ່ຢ່າລືມວ່າລູກຈະເສັຽຄົນເນີ ຫາກເອົາໃຈເກີນໄປ.

3. ບົດຮຽນວັນນີ້ຈະເວົ້າເຖິງຊາຍໜຸ່ມຊື່ວ່າ ແຊມຊັນ ລາວມີພ້ອມຫລາຍຢ່າງ ລາວເປັນຜູ້ຮັບໃຊ້ພຣະເຈົ້າທີ່ຖືກສົ່ງໃຫ້ໄປຊ່ອຍອິສຣາເອນໃຫ້ພົ້ນຈາກການກົດຂີ່ຂົ່ມເຫງ ແຕ່ລາວເປັນຄົນທະນົງຕົວ ແລະເປັນຄົນເຫັນແຕ່ຕົວ ດັ່ງນັ້ນວຽກງານການຮັບໃຊ້ຂອງລາວຈຶ່ງບໍ່ໄປຮອດໃສ.

## ຕົ້ນເດີມຂອງຄຳສັນຍາ (13:1-5, 14:1-9).

1. ເວົ້າເຖິງການເກີດຂອງແຊມຊັນ

ກ. ທ່ານມາໂນອາ ມີເມັຽເປັນໝັນ ຄືວ່າລາວຈະບໍ່ມີລູກຕລອດຊາດ ແລະຍິງທີ່ບໍ່ມີລູກໃນສັງຄົມເຜົ່າດານແມ່ນຖືວ່າຂາດພຣະພອນ.

ຂ. ເທວະດາສຳແດງນິມິດທາງຄວາມຝັນຂອງນາງ ຂໍ້ 3-5

ຄ. ເທວະດາໄດ້ບອກລາຍລະອຽດໃນການລ້ຽງດູແຊມຊັນ ຂໍ້ 3-5

ງ. ແຊມຊັນເປັນລູກຂອງຍິງໝັນ ແລະຊາຍແກ່ ຈຶ່ງມັກເອົາໃຈລູກ ດັ່ງນັ້ນລາວຈຶ່ງເຮັດທຸກຢ່າງຕາມໃຈ ຢາກໄດ້ຫຍັງກະໄດ້ໂລດ "*ລູກຢາກແຕ່ງງານກັບນາງ ກະຣຸນາໄປຂໍນາງໃຫ້ລູກແດ່* " (14:2ຂ).
ຈ. ພໍ່ແລະແມ່ແນະນຳໃຫ້ເອົາເມັຽໃນວົງຕະກູນລາວບໍ່ຍອມ ຈຶ່ງຕອບວ່າ "*ລູກພໍໃຈນຳນາງແຕ່ຄົນດຽວ ໄປສູ່ຂໍນາງໃຫ້ລູກແດ່*" (ຂໍ້3ຂ). ຫາກເປັນພາສາດຽວນີ້ຈະເວົ້າວ່າ ຫາກຂ້ອຍບໍ່ໄດ້ລາວຂ້ອຍຈະບໍ່ເອົາເມັຽ.
ສ. ເລົ່າການເດີນທາງຂອງແຊມຊັນ ທີ່ຈົກສິງດ້ວຍຝ່າມືເປົ່າ ດ້ວຍກຳລັງທີ່ມາຈາກພຣະເຈົ້າ

## <u>ແຊມຊັນບໍ່ເຮັດໜ້າທີ່ຂອງຜູ້ຊ່ອຍ</u> (16:1-30).

1. ແຊມຊັນເຂົ້າໄປໃນເມືອງກາສາເປັນເຂດແດນອັນຕະລາຍເພາະເປັນເຂດຂອງຟີລິສຕິນ ແຕ່ລາວບໍ່ຢ້ານ ຈຶ່ງເຂົ້າໄປຫລິ້ນໃນບາແລະຄົບກັບຍິງໂສເພນີຊື່ວ່ານາງເດລີລາ. (ຂໍ້ 1).

2. ພວກຟີລິສຕິນຢາກຮູ້ຈຸດອ່ອນຂອງແຊມຊັນ ຈຶ່ງວາງແຜນຈັບລາວ ແຕ່ຈັບບໍ່ໄດ້ (ຂໍ້ 2).

3. ກະສັດທັງຫ້າຂອງຟີລິສຕິນໄດ້ວາງຄ່າຈ້າງ 1100 ຕໍ່ກະສັດ ຮວມເປັນ 5500 ໃຫ້ນາງສືບຖາມແຊມຊັນ ວ່າເປັນຫຍັງລາວຈຶ່ງມີແຮງແທ້? (ຂໍ້ 5).

4. ນາງເດລີລາຮັບປາກແລະຕັ້ງແຜນການສືບເອົາຄວາມລັບຂອງແຊມຊັນ ຈາກ ຂໍ້ 6-14 ແຊມຊັນບໍ່ໄດ້ເປີດເຜີຍຄວາມລັບໃຫ້ນາງເດລີລາຮູ້.

5. ນາງເດລີລາໃຊ້ໄມ້ຕາຍ ຂໍ້ 15-16

6. ແຊມຊັນຍອມແພ້ຕໍ່ນາງເດລີລາ ໂດຍຍອມບອກຄວາມລັບໃຫ້ນາງ (ຂໍ້ 17).

7. ແຊມຊັນຖືກເຂົາຈັບ, ຄວັດຕາສອງຂ້າງອອກ, ໃສ່ໂສ້ຂັງໃນຄຸກ, ເຮັດວຽກໜັກ (ຂໍ້ 18-22).

8. ແຊມຊັນອ້ອນວອນຄັ້ງແຣກຫລັງຈາກຖືກຈັບ (ຂໍ້ 28).

9. ທຸກຄົນໃນງານລ້ຽງຖືກວິຫານລົ້ມທັບຕາຍ ຮວມທັງແຊມຊັນດ້ວຍ (ຂໍ້ 29).

*ທວ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 13
## ຄວາມບໍ່ເຂົ້າໃຈເປັນຈຸດເລີ້ມຂອງບັນຫາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພວກຜູ້ປົກຄອງ 17:1-6; 18:1; 19:1; 20;1-7; 21:25

**ພູມຫລັງຂອງພຣະຄັມພີ:** ພວກຜູ້ປົກຄອງ 17-21

**ຈຸດສຳຄັນຂອງບົດຮຽນນີ້:** ການສ້າງພຣະເຈົ້າໃນຮູບຮ່າງເຮົາເປັນທົນທາງສູ່ຫາຍຍະນະ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະຊອກເຮັດອັນໃດເພື່ອໃຫ້ເໝາະກັບຄວາມເຊື່ອຂອງເຮົາ?

**ຈຸດປະສົງຂອງບົດຮຽນ:** ເພື່ອເຮົາຈະຮູ້ວ່າເຮົາຈະຕ້ອງເຮັດອັນໃດເພື່ອໃຫ້ເໝາະກັບຄວາມເຊື່ອຂອງເຮົາ.

### ບົດນຳ

ບົດຮຽນວັນອາທິດນີ້ຍາວຜິດປົກກະຕິ ດັ່ງນັ້ນຄຣູຈະຕ້ອງຕຽມຢ່າງຄັກແນ່ ຫາກບໍ່ສາມາດຈົບໃນວັນອາທິດດຽວໄດ້ ທ່ານອາດແບ່ງເປັນສອງວັນອາທິດກໍໄດ້.

### ໂຈນ, ສ້າງພຣະປອມ ແລະສ້າງສາສນາສຳລັບຄອບຄົວ (17:1-6).

1. ເລົ່າເຣື່ອງແມ່ປ້ອຍດ່າ ແລະມີກາສາຣະພາບ.
2. ແມ່ແກ້ໄຂຄຳສາບແຊ່ງ ໂດຍວ່າຈະຖວາຍເງິນທັງໝົດ ແຕ່ເອົາ 200 ໄປໂອບພຣະໄມ້
3. ເຂົາສ້າງສາສນາປະຈຳເຮືອນ.

<u>ສລຸບບົດຮຽນວັກທີ 1</u>; 1. ເປັນຄຣິສຕຽນຈະບໍ່ເປັນຄົນປ້ອຍດ່າ. 2. ບໍ່ເຮັດຕາມຄວາມເຂົ້າໃຈຕົນເອງ. 3. ບໍ່ສ້າງແທ່ນຂາບໄຫວ້ໃນເຮືອນ.

### ປະໂຣຫິດຮັບຈ້າງ (18:7-13).

1. ມີກາແລະແມ່ໃຊ້ອຳນາດເງິນຈ້າງຄົນເລວີທີ່ທ່ອງທ່ຽວຊອກຫາຕັ້ງຖິ່ນຖານ.
2. ທັງສອງແມ່ລູກເຂົ້າໃຈຜິດວ່າພຣະເຈົ້າສົ່ງຄົນເລວີໃຫ້ມາເປັນປະໂຣຫິດ ເພາະເຂົາເຮັດຕາມຄວາມເຂົ້າໃຈຕົນເອງ.

## <u>ໜີໄປກັບຜູ້ຈ້າງແພງກວ່າ</u> (18:1-31).

1. ເມື່ອບໍ່ມີກະສັດປົກຄອງທຸກເຜົ່າໄດ້ເຮັດຕາມໃຈ. ພວກເຮົາກໍຈະເປັນແນວນັ້ນຫາກບໍ່ມີຜູ້ປົກຄອງ

2. ເຜົ່າດານຊອກຫາແຜ່ນດິນ ແຕ່ແນໃສ່ສົງຄາມແບບຂ້າເຈົ້າເອົາຂອງ.

3. ປະໂຣຫິດຂອງມີກາໜີໄປຢູ່ກັບເຜົ່າດານ ເພາະຈ້າງຫລາຍກວ່າ ເປັນກຸ່ມທີ່ໃຫຍ່ກວ່າ.

<u>ສລຸບບົດຮຽນວັກທີ 2:</u> 1. ຢ່າເຮັດຕາມໃຈຊອບຂອງຕົນເອງ. 2. ຢ່າຢາກໄດ້ຂອງຜູ້ອື່ນ.
3. ຢ່າເຫັນແກ່ຄ່າຈ້າງຢ່າງດຽວໃນການຮັບໃຊ້ພຣະເຈົ້າ.

## <u>ນັບມື້ນັບເສື່ອມໂຊມລົງ</u> (19:1-28).

1. ຄົນເລວີຜູ້ນຶ່ງມີເມັຽນ້ອຍເປັນຄົນອິສຣາເອນເມື່ອຜິດຖຽງກັນເມັຽກັບໄປຢູ່ກັບພໍ່ແມ່ໄດ້ 4 ເດືອນ.

2. ຜົວໄປນຳເອົາເມັຽກັບບ້ານຕອນກັບບ້ານມີນັກເລງຂົ່ມຂືນຊຳເລົາຈົນເມັຽລາວຕາຍ.

3. ລາວນຳຊາກສົບເມັຽກັບບ້ານ.

<u>ສລຸບລບົດຮຽນວັກທີ 3;</u> 1. ຢ່າໜີຈາກກັນເມື່ອຄຽດໃຫ້ກັນ. 2. ເປັນຜົວຕ້ອງປົກປ້ອງຄຸ້ມຄອງເມັຽ.

## <u>ສົງຄາມກາງເມືອງ</u> (19:29--20:48).

1. ຄົນເລວີຕັດເມັຽເຊິ່ງເປັນຄົນອິສຣາເອນອອກເປັນສິບສອງທ່ອນ ເພື່ອສົ່ງຟ້ອງອິສຣາເອນສິບສອງ ຕະກູນຂອງອິສຣາເອນ.

2. ເກີດສົງຄາມກາງເມືອງຜູ້ຄົນຕາຍຢ່າງຫລວງຫລາຍ.

3. ພວກຕໍ່ສູ້ສົງຄາມຫວັງໃຈວ່າຈະຂ້າລ້າງເຜົ່າເບັນຈະມິນ ອອກຈາກ 12 ຕະກຸນ.

## <u>ຫາເມັຽໃຫ້ເຜົ່າເບັນຈະມິນ</u> ( 21: 1-25).

1. ປະຊາຊົນຄິດບໍ່ຢາກໃຫ້ເຜົ່າເບັນຈະມິນດັບສູນ ແຕ່ສັນຍາກັນແລ້ວຈະບໍ່ໃຫ້ລູກສາວມີຜົວ ເປັນຄົນຊົນເຜົ່າເບັນຈະມິນ. .

2. ໃນສມັຍສົງຄາມນັ້ນເຂົາເຫັນວ່າຄົນໃນເມືອງຢາເບັດບໍ່ໄດ້ຊ່ວຍ ດັ່ງນັ້ນເຂົາຈຶ່ງສົ່ງທະຫານ 12. 000 ຄົນໄປຂ້າຊາວຢາເບັດ ແລ້ວຈັບເອົາຍິງສາວມາມອບໃຫ້ຊາຍເບັນຈະມິນເອົາເປັນເມັຽ.

3. ເນື່ອງຈາກວ່າຜູ້ຍິງ 400 ຄົນບໍ່ພຽງພໍເຂົາຈຶ່ງວາງແຜນໃຫ້ຊາຍເບັນຈະມິນຈອບລັກເອົາຍິງສາວ ເມືອງຊີໂລທີ່ອອກມາເຕັ້ນລຳໃນເທສການປະຈຳປີນັ້ນໃຫ້ຊາຍເບັນຈະມິນໄປຍຶດເອົາພວກນາງ ໄປເປັນເມັຽ. (ຂໍ້ 21).

ທວ

**ຄຳແນະນຳສຳລັບຄຣູສອນ**

**ບົດຮຽນອີສເຕີ**

**<u>ຖືກດູໝິ່ນ, ຖືກປະລະ, ຖືກຄຶງ, ຄືນພຣະຊົນ</u>**

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 15:16-20, 24-40; 16:1-8

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 15--16

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ບອກໃຫ້ຮູ້ວ່າຊົງຖືກດູໝິ່ນ, ຖືກຄຶງ ແລະຄືນພຣະຊົນເພື່ອເຮົາ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະຮຽນອົດທົນເມື່ອຖືກທົດລອງໄດ້ແນວໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອສອນໃຫ້ຮູ້ວ່າການທົດລອງໃນຊີວິດຖືກຄ້ຳປະກັນໂດຍການຄືນພຣະຊົນ.

## <u>ບົດນຳ</u>

ວັນອີສເຕີ ເປັນວັນຄືນພຣະຊົນຂອງພຣະເຢຊູ ດ້ວຍເຫດນີ້ຄຣິສຕຽນທົ່ວໂລກຈຶ່ງພາກັນສເລີສລອງດ້ວຍຄວາມຊົມຊື່ນຍິນດີ ດ້ວຍວ່າບໍ່ມີຜູ້ນຳສາສນາໃດທີ່ຕາຍໄປແລ້ວເປັນຄືນມາອີກ ການທີ່ເປັນດັ່ງນີ້ກໍເພາະວ່າພຣະເຢຊູບໍ່ແມ່ນຜູ້ນຳສາສນາ ແຕ່ພຣະອົງຊົງເປັນພຣະເຈົ້າ.

## <u>ຖືກປະລະ, ຖືກເຍາະເຍີ້ອຍ ແລະຖືກຂົ່ມເຫງ</u> (ມາຣະໂກ 15:16-20).

1. ປະມານ 680 ປີ ກ່ອນໜ້າພຣະເຢຊູລົງມາເກີດໄດ້ມີຜູ້ປະກາດພຣະທັມເອຊາຢາ ໄດ້ທຳນວາຍເຖິງພຣະເຢຊູຈະໄດ້ຮັບຄວາມອັບອາຍຂາຍໜ້າ, ຖືກປະລະໂດບບໍ່ມີມະນຸດຜູ້ໃດຊ່ອຍໄດ້, ຊົງຈະຖືກຂ້ຽນຕີ, ຖືກເຍາະເຍີ້ຍ ແລະຈະຖືກຂົ່ມເຫງ (ອ່ານ ພຣະທັມເອຊາຢາ 52:4-8 ໃນບົດຮຽນ).

2. ປະມານ 680 ປີ ຕໍ່ມາສິ່ງທີ່ເອຊາຢາໄດ້ທຳນວາຍໄວ້ເກີດເປັນຈິງໃນມາຣະໂກບົດ 15.

3. ທຸກສິ່ງທີ່ເກີດຂຶ້ນກັບພຣະເຢຊູນັ້ນແມ່ນແຜນການຂອງພຣະເຈົ້າຊົງໄຖ່ໂທດມະນຸດ (ອ່ານ ໂຣມ 3:23 ແລະ ໂຣມ 6:23).

## <u>ພຣະເຢຊູສິ້ນພຣະຊົນ ( ມາຣະໂກ 24-40).</u>

1. ການຄຶງທີ່ໄມ້ກາງແຂນທີ່ໂຄລະໂຄທາ ແມ່ນບ່ອນກອງທັບກະໂຫລກ ແລະການປະຫານນີ້ເປັນວິທີຂອງພວກໂຣມັນປະຫານນັກໂທດ.(ຂໍ້ 22).

2. ເຂົາເອົາເຄື່ອງນຸ່ງພຣະອົງມາຈົກສລາກແບ່ງປັນກັນ ແມ່ນເຮັດເພື່ອເຍາະເຍີຍເພື່ອເຮັດໃຫ້ພຣະອົງໄດ້ຮັບຄວາມອັບຂາຍໜ້າເທົ່ານັ້ນ ບໍ່ແມ່ນເຂົາຢາກໄດ້ເຄື່ອງພຣະອົງແຕ່ຢ່າງໃດ. (ຂໍ້ 24).

3. ຊົງຖືກຄຶງຖ້າມກາງໂຈນຮ້າຍສອງຄົນ ເປັນພາບພົດພຣະຊົງຊົງຢູ່ຖ້າມກາງຄົນຜິດບາບ ເພື່ອຕຽມຍົກໂທດໃຫ້ເຂົາເມື່ອເຂົາຍອມຮັບເອົາພຣະອົງ (ຂໍ້ 27).

4. ຄົນຜ່ານໄປມາກໍໄດ້ໝິ່ນປມາດພຣະອົງ ເວົ້າດູໝິ່ນຕ່າງໆນາໆ ກໍເປັນພາບພົບຜູ້ຄົນໃນໂລກດຽວນີ້ກຳລັງໝິ່ນປມາດບໍ່ຮັບເຊື່ອພຣະອົງ (ຂໍ້ 29-31).

5. ມາຣະໂກບອກວ່າໂຈນທັງສອງກໍໄດ້ກ່າວຄຳຫຍາບຊ້າດ້ວຍ ແຕ່ລູກາບອກວ່າມີໂຈນຜູ້ນຶ່ງຮັບເຊື່ອພຣະອົງ (ລູກາ 23:42). ເປັນພາບພົດວ່າຄົນບາບກັບໃຈ, ຄືທ່ານແລະຂ້າພະເຈົ້ານັ້ນເອງ.

## <u>ການຄືນພຣະຊົນເປັນຄວາມຫວັງ</u> (ມາຣະໂກ 16:1-8).

1. ໃຫ້ເລົ່າເຣື່ອງນາງນ້ອຍນອນໂຮງພະຍາບານລໍຖ້າປ່ຽນໝາກໄຂ່ຫລັງ ລາວມີຫວັງຈະໄດ້ໝາກໄຂ່ຫລັງເພາະລາວມີຊື່ໃນບັນຊີຈະຮັບໝາກໄຂ່ຫລັງເມື່ອທາງໂຮງພະຍາບານມີ. ນີ້ຄືຄຣິສຕຽນມີຄວາມຫວັງ.

2. ພວກແມ່ຍິງເຫລົ່ານີ້ພາກັນຕັ້ງໃຈຈະໄປທົດສົງພຣະສົບຂອງພຣະເຢຊູທີ່ອຸບໂມງຫລັງຈາກສາມວັນຜ່ານໄປ ເພາະເຂົາຍັງບໍ່ທັນເຂົ້າໃຈໃນສິ່ງທີ່ພຣະເຢຊູຊົງສອນ, ເຂົາຄິດວ່າພຣະອົງຍັງຢູ່ໃນອຸບໂມງ.

3. ໃນຂະນະທີ່ໄປນັ້ນພວກແມ່ຍິງຄຶດຍາກວ່າໃຜຈະກິ້ງກ້ອນຫີນໃຫຍ່ທີ່ອັດປາກອຸບໂມງອອກໃຫ້? (ຂໍ້ 3). ບອກນັກຮຽນວ່າ ສິ່ງທີ່ເຮົາຄຶດວ່າຍາກມັນອາດງ່າຍກໍໄດ້ຫາກເຮົາເຮັດໃນພຣະນາມພຣະເຢຊູ.

4. ພໍພວກຜູ້ຍິງໄປຮອດອຸບໂມງກໍເຫັນວ່າອຸບໂມງນັ້ນໄດ້ເປີດອອກແລ້ວ ມີແຕ່ເທວະດາຍັງຢູ່ທີ່ນັ້ນຖ້າບອກຂ່າວໃຫ້ພວກແມ່ຍິງຮູ້ (ຂໍ້ 5-7).

5. ຜູ້ຍິງເຫລົ່ານີ້ຟ້າວອອກຈາກອຸບໂມງໄປໂດຍຢ້ານຈົນຕົວສັ່ນ (ຂໍ້ 8).

*ທວ*